ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-31 ກໍລະກົດ 2024
ປີທີ 13
ສະບັບທີ 979
ລາຍສັປະດາ

## ຮອງປະທານສະພາແຫ່ງຊາດ ຕິດຕາມກວດກາ ໂຄງການລົງທຶນຂອງລັດ ຢູ່ 2 ແຂວງພາກເໜືອ



(ສພຊ) - ໃນວັນທີ 13 ແລະ 15 ກໍລະກົດ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຫຼວງນ້ຳທາ ແລະ ແຂວງຜົ້ງສາລີ ໂດຍໄດ້ດຳເນີນກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຂອງສະພາແຫ່ງຊາດ ແລະ ການຈັດຕັ້ງປະຕິບັດວຽກງານຂົງເຂດຍຸຕິທຳ; ໃນການຢ້ຽມຢາມຄັ້ງນີ້, ທ່ານຮອງປະ

ອ່ານຕໍ່ໜ້າ 11




## ເຜີຍແຜ່ກົດໝາຍການແກ້ໄຂຄຳຮ້ອງທຸກ ຢູ່ 2 ແຂວງ



(ສພຊ) - ໃນວັນທີ 10 ແລະ 12 ກໍລະກົດ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງໄຊຍະບູລີ ແລະ ບໍ່ແກ້ວເພື່ອດຳເນີນກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ2022; ໃນກອງປະຊຸມດັ່ງກ່າວ ໄດ້ມີທ່ານປະທານ ແລະ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ບັນດາພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງ 2 ແຂວງດັ່ງກ່າວ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນກອງປະຊຸມຢູ່ທັງ 2 ແຂວງ, ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ກ່າວວ່າ: ການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ໄດ້ດຳເນີນໄປໃນຂອບເຂດທົ່ວປະເທດ ໃຫ້ແກ່ກະຊວງ, ອົງການ ແລະ ຂະ

ອ່ານຕໍ່ໜ້າ 4

## ປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ປີ 2015

### ຂົງເຂດການປົກຄອງ ແລະ ຍຸຕິທຳ, ປກຊ-ປກສ ແລະ ການຕ່າງປະເທດ




(ສພຊ) - ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015 ໃນຂົງເຂດການປົກຄອງ ແລະ ຍຸຕິທຳ ຫຼື ອຳນາດລັດ (ຈຸດທີ 3) ໄດ້ຈັດຂຶ້ນໃນວັນທີ 11 ກໍລະກົດ ທີ່ໂຮງແຮມເມືອງແທ່ງ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ (ຈຸດທີ 4) ໃນວັນທີ 12 ກໍລະກົດຜ່ານມາ ທີ່ກະຊວງປ້ອງກັນປະເທດ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງ

ອ່ານຕໍ່ໜ້າ 11

## ສະມາຄົມມິດຕະພາບລາວ-ກຳປູເຈຍ, ກຳປູເຈຍ-ລາວ ພົບປະສອງຝ່າຍ



(ສພຊ) - ລະຫວ່າງວັນທີ 8-12 ກໍລະກົດ 2024 ຄະນະຜູ້ແທນສະມາຄົມມິດຕະພາບລາວ-ກຳປູເຈຍ ຂັ້ນສູນກາງ ນຳໂດຍທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກຳປູເຈຍ ຂັ້ນສູນກາງ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ລາຊະອານາຈັກກຳປູເຈຍ.

ການເຄື່ອນໄຫວໃນຄັ້ງນີ້, ຄະນະຜູ້ແທນສະມາຄົມມິດຕະພາບລາວ-ກຳປູເຈຍ ໄດ້ພົບປະ ແລະ ເຮັດວຽກກັບຄະນະສະມາຄົມມິດຕະພາບ ກຳປູເຈຍ-ລາວ ທີ່ນະຄອນຫຼວງພະນົມເປັນ ເຊິ່ງສອງຝ່າຍໄດ້ຕີລາຄາຄືນການຈັດຕັ້ງປະຕິບັດການພົວພັນຮ່ວມມືຂອງສອງສະມາຄົມ ໂດຍສະເພາະແມ່ນເນື້ອໃນບົດບັນທຶກຄວາມເຂົ້າໃຈທີ່ໄດ້ລົງນາມຮ່ວມກັນໃນປີ 2022 ແລະ ປຶກສາຫາລືແຜນການ, ກິດຈະກຳໃນຕໍ່ໜ້າ ເພື່ອເຮັດໃຫ້ການພົວພັນຮ່ວມມືລະຫວ່າງສອງສະມາຄົມມິດຕະພາບລາວ-ກຳປູເຈຍ, ກຳປູເຈຍ-ລາວ ມີຫຼາຍສີສັນ, ຫຼາຍຮູບແບບທັງມີປະສິດທິພາບ-ປະສິດທິຜົນດີຂຶ້ນກວ່າເກົ່າ; ໃນໄລຍະຜ່ານມາ ການນຳຂັ້ນສູງຂອງສອງປະເທດ ໄດ້ໄປມາຫາສູ່ກັນເປັນປົກກະຕິ, ການພົວພັນຮ່ວມມືຂອງບັນດາຂົງເຂດ, ຂະແໜງ

ອ່ານຕໍ່ໜ້າ 11

## ທ່ານ ສົມມາດ ພົລເສນາ ພົບປະ ເຮັດວຽກກັບຫົວໜ້າພັກໂຄເມອິໂຕະ



ອ່ານຕໍ່ໜ້າ 11

## ປັບປຸງມະຕິການຈັດຕັ້ງປະຕິບັດຄາດໝາຍວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

(ສພຊ) - ກອງປະຊຸມປັບປຸງຮ່າງມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ໄດ້ຈັດຂຶ້ນໃນວັນສຸກທີ 12 ກໍລະກົດ 2024 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະ

ອ່ານຕໍ່ໜ້າ 4



# ຮຽບຮຽງເນື້ອໃນກົດໝາຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ 15-16 ກໍລະກົດຜ່ານມາທີ່ທ່າລາດແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການ ສພຊ, ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ພ້ອມກັນຄົ້ນຄວ້າແລະຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໃນຕອນບ່າຍວັນທີ 27 ມິຖຸນາ 2024 ຈຳນວນ 8 ທ່ານ ໃນ 23 ມາດຕາ ກວມເອົາ 45 ເນື້ອໃນ, ຄະນະຮັບຜິດຊອບປັບປຸງກົດໝາຍ ກໍໄດ້ຄົ້ນຄວ້າພິຈາລະນາປັບປຸງໃນເບື້ອງຕົ້ນແລ້ວ ເຊິ່ງທ່ານຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ລາຍງານຜົນການປັບປຸງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນເຊົ້າວັນທີ 01 ກໍລະກົດ 2024 ຫຼັງຈາກນັ້ນ, ສສຊ ກໍໄດ້ພິຈາລະນາຮັບຮອງເອົາດ້ວຍຄະແນນສຽງເຫັນດີ 147 ທ່ານ ເທົ່າກັບ 96,71%; ເຖິງຢ່າງໃດກໍຕາມ, ມີບັນດາທ່ານສສຊ ໄດ້ປະກອບຄຳເຫັນຢ່າງຫຼາກຫຼາຍ ແລະ ກິ່ງໄປກິ່ງມາຕໍ່ເນື້ອໃນຕ່າງໆຂອງຮ່າງກົດໝາຍສະບັບນີ້. ສະນັ້ນ, ພວກເຮົາຈະໄດ້ສຸມໃສ່ຄົ້ນຄວ້າຢ່າງເລິກເຊິ່ງ ເພື່ອເລືອກເຟັ້ນເອົາຄຳເຫັນຂອງຜູ້ແທນມາພິຈາລະນາປັບປຸງໃສ່ກົດໝາຍ ແລະ ເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍ, ຖ້າເຫັນວ່າຍັງມີຈຸດໃດ, ຄຳສັບຄຳເວົ້າໃດ ທີ່ບໍ່ທັນຈະແຈ້ງ ແລະ ສອດຄ່ອງ ກໍສາມາດຍົກຂຶ້ນຕື່ມເພື່ອເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສົມບູນກ່ອນປະທານສະພາແຫ່ງຊາດຈະລົງລາຍເຊັນ.

ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນກົດໝາຍສະບັບນີ້ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ຮັບປະກັນໃຫ້ບັນດາຄຳຄິດຄຳເຫັນຂອງ ສສຊ ທີ່ໄດ້ປະກອບໃສ່ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ຮັບການຄົ້ນຄວ້າເລືອກເຟັ້ນປັບປຸງໃສ່ຮ່າງກົດໝາຍດັ່ງກ່າວ ໃຫ້ມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິອາຊີ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍ ເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ຕາດຳ ຫ່ານຟ້າ)**

# ຮອງປະທານສະພາແຫ່ງ ຮັບການເຂົ້າຢ້ຽມ ຂໍ່ານັບຂອງສະມາຊິກສະພາສູງອາເມລິກາ



(ສພຊ) - ຕອນບ່າຍວັນທີ 15 ກໍລະກົດນີ້ ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ລັດດາ ແທມມີ ດັກເວີດ (Ladda Tammy Duckworth) ສະມາຊິກສະພາສູງລັດອິວລິນອຍ (Illinois), ສະຫະລັດອາເມລິກາ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ສປປລາວລະຫວ່າງວັນທີ 14-17 ກໍລະກົດ 2024.

ໃນການຢ້ຽມຂໍ່ານັບ, ນາງ ລັດດາ ແທມມີ ດັກເວີດ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນ ແລະລາຍງານການປະຕິບັດໜ້າທີ່ວຽກງານຂອງຕົນໂດຍຫຍໍ້ ພ້ອມທັງແຈ້ງໃຫ້ຊາບຈຸດປະສົງຂອງການມາຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ເພື່ອຕິດຕາມກວດກາການນຳໃຊ້ງົບປະມານການຊ່ວຍເຫຼືອຂອງສະຫະລັດອາເມຣິກາ ຢູ່ ສປປ ລາວ ຕໍ່ເສດຖະກິດ, ພະລັງງານເປັນມິດກັບສິ່ງແວດລ້ອມແລະການພັດທະນາແບບຍືນຍົງ.

ທ່ານ ສົມມາດ ພົລເສນາ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ເປັນການປະກອບສ່ວນເສີມສ້າງສາຍພົວພັນຮ່ວມມືອັນດີນຳກັນ ແລະ ໄດ້ຍົກລະດັບການພົວພັນຮ່ວມມືສອງຝ່າຍ ສປປລາວ - ສ.ອາເມລິກາເປັນຄູ່ຮ່ວມມືແບບກວມລວມ ໃຫ້ເປັນຮູບປະທຳຫຼາຍຂຶ້ນ; ທັງປິຕິຍິນດີເປັນຢ່າງຍິ່ງທີ່ການພົວພັນຮ່ວມມືສອງຝ່າຍໃນໄລຍະຜ່ານມາໄດ້ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ ນັບແຕ່ໄດ້ສ້າງຕັ້ງສາຍພົວພັນການທູດຮ່ວມກັນໃນວັນທີ 10 ສິງຫາ 1955 ທ່ານຍັງໄດ້ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ລັດຖະບານສະຫະລັດອາເມລິກາ ທີ່ໄດ້ໃຫ້ການສະໜັບສະໜູນ ສປປ ລາວ ພາຍໃຕ້ການເປັນຄູ່ຮ່ວມມືແບບກວມລວມ ລາວ-ອາເມຣິກາ ໃນຂະແໜງການຕ່າງໆ ເຊັ່ນ: ການແກ້ໄຂບັນຫາຕົກຄ້າງຈາກສົງຄາມ (ເກັບກູ້ລະເບີດຍັງບໍ່ທັນແຕກ - UXO, ຊອກຄົ້ນສິ່ງເສດເຫຼືອປາງສົງຄາມ-MIA), ການຈັດຕັ້ງປະຕິບັດກົດໝາຍ ແລະປາບປາມຢາເສບຕິດ, ດ້ານເສດຖະກິດ-ການຄ້າ, ສາທາລະນະສຸກ, ສຶກສາ, ພະລັງງານ, ກະສິກຳ, ວັດທະນະທຳ-ສັງຄົມ ແລະ ອື່ນໆ. ການສະໜັບສະໜູນແລະຊ່ວຍເຫຼືອຂອງອາເມລິກາ ເປັນການປະກອບສ່ວນອັນສຳຄັນໃຫ້ແກ່ການພັດທະນາຢູ່ ສປປ ລາວ ກໍຄືການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ລວມທັງປະກອບສ່ວນໃນການສະກັດກັ້ນ ແລະ ປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19; ການຈັດຕັ້ງປະຕິບັດໂຄງການຮ່ວມມືຕ່າງໆໃນໄລຍະຜ່ານມາ ເຫັນວ່າມີປະສິດທິພາບ, ປະສິດທິຜົນ ກໍຄືສາມາດບັນລຸໄດ້ຕາມເປົ້າໝາຍ ໂດຍຜ່ານອົງການຈັດຕັ້ງສາກົນຕ່າງໆ.

ສຳລັບການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ແມ່ນມີການພົວພັນຮ່ວມມືອັນດີນຳກັນ; ໃນໄລຍະ 5 ປີຜ່ານມາ ໄດ້ມີຄະນະຜູ້ແທນລະດັບກຳມາທິການຂອງລັດຖະສະພາອາເມລິກາຢ້ຽມຢາມຢ່າງເປັນທາງການຢູ່ ສປປ ລາວ 2 ຄະນະ, ຝ່າຍລາວແມ່ນທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ຢ້ຽມຢາມ ແລະ ທັດສະນະສຶກສາຢູ່ສ.ອາເມລິກາໃນເດືອນກໍລະກົດ 2023 ເຊິ່ງຖືວ່າເປັນບາດກ້າວໃໝ່ແຫ່ງການພົວພັນຮ່ວມມື; ສຳລັບການພົວພັນຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ກໍມີການພົວພັນປະສານງານກັນ ເປັນຕົ້ນໃນເວທີລັດຖະສະພາອາຊີ-ປາຊີຟິກ (APPF), ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ແລະ ອື່ນໆ.

ສຳລັບການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ, ທ່ານຮອງປະທານສະພາແຫ່ງຊາດ ສະເໜີສືບຕໍ່ການແລກປ່ຽນຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ ແລະ ວິຊາການຮ່ວມກັນ ຕິດພັນກັບການແລກປ່ຽນຂໍ້ມູນແລະບົດຮຽນປະສົບການກ່ຽວກັບການປະຕິບັດພາລະບົດບາດດ້ານນິຕິບັນຍັດ; ສະໜັບສະໜູນແລະຊ່ວຍເຫຼືອພາຍໃຕ້ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ທີ່ພວມຈັດຕັ້ງປະຕິບັດຮ່ວມກັບສະພາແຫ່ງຊາດລາວ; ຊຸກຍູ້ການພົວພັນຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ໂດຍສະເພາະໃນປີນີ້ ສປປ ລາວ ເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ເປັນປະທານໄອປາ ແລະ ຈະຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 (AIPA-45) ໃນວັນທີ 17-23 ຕຸລາ 2024 ແລະ ຫວັງຢ່າງຍິ່ງວ່າ ສະຫະລັດອາເມຣິກາ ຈະໃຫ້ການສະໜັບສະໜູນໂດຍສົ່ງຄະນະເຂົ້າຮ່ວມໃນນາມລັດຖະສະພາສັງເກດການ.

**(ນາງ ອາລິນ ສຸພົມມະປະກິດ)**

# ສຳມະນາການກະກຽມເນື້ອໃນກອງປະຊຸມໄອປາ



(ສພຊ) - ກອງປະຊຸມສຳມະນາແລກປ່ຽນຄຳຄິດເຫັນ, ບົດຮຽນທີ່ດີກ່ຽວກັບການຮ່າງມະຕິ, ບົດສະເໜີຂອບເນື້ອໃນ ແລະເນື້ອໃນອື່ນໆ ໃຫ້ແກ່ການກະກຽມເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໄດ້ຈັດຂຶ້ນໃນວັນທີ 11 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ; ເຂົ້າຮ່ວມມີບັນດາທ່ານຄະນະກົມ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຊ.

ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອແລກປ່ຽນບົດຮຽນການກະກຽມບັນດາເນື້ອໃນກອງປະຊຸມໄອປາ ໂດຍສະເພາະແມ່ນການຮ່າງມະຕິ, ບົດ

ອ່ານຕໍ່ໜ້າ 3

# ເຝິກອົບຮົມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຕິດພັນກັບການພັດທະນາໂຄງການ



(ສພຊ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ), ສະມາຊິກສະພາປະຊາຊົນແຂວງ (ສສຂ) ໃນຂົງເຂດເສດຖະກິດແລະວິຊາການ ຊ່ວຍວຽກຂອງກຳມາທິການ ກສຕສ, ເສນາທິການຊ່ວຍວຽກຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຂອງສະພາປະຊາຊົນແຂວງ (ສພຂ) 7 ແຂວງ: ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກແລະອັດຕະປື ໄດ້ຈັດຂຶ້ນໃນວັນທີ 15-16 ກໍລະກົດ 2024 ທີ່ເມືອງປາກຊ່ອງ ແຂວງຈຳປາສັກ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ເຂົ້າຮ່ວມມີປະທານ ແລະ ຮອງປະທານ ສພຂ ຈຳປາສັກ, ຄະນະຮັບຜິດຊອບແລະພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງຂອງການເຝິກອົບຮົມ ແມ່ນເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ວຽກງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ໃຫ້ແກ່ສະມາຊິກສະພາ ແລະ ວິຊາການ ໃນການຄົ້ນຄວ້າວິເຄາະ, ວິໄຈແລະສັງລວມບັນຫາຕ່າງໆໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ (ຄປຈ ສພຊ) ແລະ ສພຂ; ແລກປ່ຽນບົດຮຽນ, ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດວຽກງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຂອງບັນດາໂຄງການລົງທຶນທັງເປັນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ພະນັກງານຂອງ ສພຊ ແລະ ສພຂ.

ໃນການກ່າວເປີດກອງປະຊຸມ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນວ່າ: ຕະຫຼອດໄລຍະຜ່ານມາ ຄະນະປະຈຳສະພາແຫ່ງຊາດ ໄດ້ຖືສຳຄັນວຽກງານຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາ ແລະ ວິຊາການທີ່ເປັນເສນາທິການໃຫ້ ສພຊ ແລະ ສພຂ ໂດຍມີການຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ວຽກງານຍົກສູງສ້າງຄວາມສາມາດໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແນໃສ່ຮັບປະກັນການປະຕິບັດພາລະບົດບາດຂອງ ສສຊ ແລະ ສສຂ ກໍຄືຂອງ ສພຊ ແລະ ສພຂ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງຂຶ້ນເລື້ອຍໆ ໂດຍສະເພາະການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ (ດ້ານນິຕິບັນຍັດ), ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງທ້ອງຖິ່ນ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການຈັດຕັ້ງລັດຂັ້ນຕ່າງໆຜ່ານ ສພຊ ແລະ ສພຂ; ດ້ວຍເຫດນີ້, ຈຶ່ງມີຄວາມຈຳເປັນຕ້ອງໄດ້ເຝິກອົບຮົມຍົກສູງສ້າງຂີດຄວາມສາມາດ ແລະ ຄວາມຮັບຮູ້ທາງດ້ານວິຊາການສະເພາະດ້ານໃຫ້ແກ່ສະມາຊິກສະພາແລະວິຊາການທີ່ກ່ຽວຂ້ອງໃຫ້ເລິກເຊິ່ງ ແລະ ກວ້າງຂວາງ.

ໃນກອງປະຊຸມ ທ່ານ ຄຳມ່ວນ ຊົມສິທາປັນຍາ ຮອງປະທານກຳມາທິການ ກສຕສ ໄດ້ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍຂັ້ນຕອນການພິຈາລະນາແຜນພັດທະນາພະລັງງານໄຟຟ້າ ແລະ ແຮ່ທາດແຫ່ງຊາດ, ໂຄງການສຳປະທານພັດທະນາໄຟຟ້າ, ບໍ່ແຮ່ ແລະ ໂຄງລ່າງພື້ນຖານ ສະບັບເລກທີ02/ຄປຈ, ລົງວັນທີ06/01/2022 ແລະຮັບຟັງການສະເໜີບົດຈາກຜູ້ຕາງໜ້າຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນຫົວຂໍ້ 1). ຂັ້ນຕອນແລະການປະເມີນລາຄາທີ່ດິນ; 2). ຂັ້ນຕອນ ແລະ ວິທີການຄົ້ນຄວ້າກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດທີ່ຕິດພັນກັບການພັດທະນາໂຄງການ ເຊັ່ນ: ໂຄງການພະລັງງານໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ ແລະ ການພັດທະນາໂຄງລ່າງພື້ນຖານ; 3). ຂັ້ນຕອນແລະວິທີການຄົ້ນຄວ້າລາຄາຫົວໜ່ວຍຊົດເຊີຍຕໍ່ຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກົງໃຈ ແສງອຳພັນ)**

## ສຳມະນາ...

(ຕໍ່ຈາກໜ້າ 2)

ສະເໜີຂອບເນື້ອໃນ, ບົດປະກອບຄຳອະທິບາຍໃສ່ຮ່າງມະຕິ, ການກະກຽມຄວາມພ້ອມປິ່ນອ້ອມວຽກງານສອງຝ່າຍ ແລະ ເນື້ອໃນອື່ນໆ ເຊິ່ງຜູ້ເຂົ້າຮ່ວມສຳມະນາຄັ້ງນີ້ ລ້ວນແຕ່ແມ່ນຜູ້ທີ່ເຮັດວຽກຕົວຈິງ, ເປັນເສນາທິການໃຫ້ແກ່ການນຳໃນການກະກຽມເນື້ອໃນກອງປະຊຸມໄອປາ ແລະກອງປະຊຸມປິ່ນອ້ອມຕ່າງໆ ເຊິ່ງເປັນໂອກາດທີ່ດີ ແລະ ເປັນເວທີປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ແລະ ສົນທະນາຢ່າງກົງໄປກົງມາ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດການກະກຽມເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ 45; ການກະກຽມເນື້ອໃນຮ່າງມະຕິຂອງກອງປະຊຸມກຳມາທິການວຽກງານເສດຖະກິດ, ກຳມາທິການການເມືອງ, ກຳມາທິການວຽກງານສັງຄົມ. ຈາກນັ້ນ, ກໍມີການສົນທະນາຖາມ-ຕອບລະຫວ່າງວິທະຍາກອນກັບສຳມະນາກອນ ຕໍ່ບັນດາຫົວຂໍ້ທີ່ຕົນເອງສົນໃຈ ເພື່ອກຳໄດ້ ແລະເຂົ້າໃຈຕໍ່ກັບຮ່າງມະຕິ, ບົດສະເໜີຂອບເນື້ອໃນ, ບົດປະກອບຄຳອະທິ ບາຍເນື້ອໃນຮ່າງມະຕິ ແລະ ການກະກຽມຄວາມພ້ອມປິ່ນອ້ອມວຽກງານສອງຝ່າຍ.

**(ສອນສັກ ວັນວິໄຊ)**

# ກອງປະຊຸມໃຫຍ່ຄັ້ງທີ I ສະຫະພັນແມ່ຍິງຮາກຖານ ກວທສ



(ສພຊ) - ກອງປະຊຸມໃຫຍ່ສະມາຊິກແມ່ຍິງ ຄັ້ງທີ I ຂອງສະຫະພັນແມ່ຍິງຮາກຖານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 10 ກໍລະກົດ ຜ່ານມາ ທີ່ຫ້ອງຖະແຫຼງຂ່າວຂອງສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານກຳມາທິການວັດທະນະທຳ-ສັງຄົມ, ສະຫາຍ ນາງ ມະນີວັນ ເຍຍປາວເຮີ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານ ສະຫະພັນແມ່ຍິງສະພາແຫ່ງຊາດແລະສະຫາຍ ນາງ ມະນີວັນ ລົດສົມພານ ຫົວໜ້າໜ່ວຍແມ່ຍິງຮາກຖານກຳມາທິການວັດທະນະທຳ-ສັງຄົມ.

ຜູ້ແທນກອງປະຊຸມ ໄດ້ຄົ້ນຄວ້າ, ປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍແມ່ຍິງຮາກຖານກຳມາທິການວັດທະນະທຳ-ສັງຄົມ ໂດຍໄດ້ຕີລາຄາສູງຕໍ່ໝາກຜົນທີ່ໜ່ວຍແມ່ຍິງຮາກຖານຍາດມາໄດ້ຕະຫຼອດໄລຍະປີ 2018-2024 ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງສະຫະພັນແມ່ຍິງສະພາແຫ່ງຊາດ, ມະຕິກອງປະຊຸມ ໃຫຍ່ສະມາຊິກພັກ ຄັ້ງທີ III ຂອງໜ່ວຍພັກຮາກຖານກຳມາທິການວັດທະນະທຳ-ສັງຄົມເຊິ່ງເປັນການສ້າງພື້ນຖານໃຫ້ແກ່ການສືບຕໍ່ຍົກລະດັບໃຫ້ສູງຂຶ້ນໃນຊຸມປີຕໍ່ໜ້າ ທັງປະກອບສ່ວນສຳຄັນເຂົ້າໃນການເຮັດສຳເລັດໜ້າທີ່ການເມືອງໃນການປະຕິບັດວຽກງານ ເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານແລະກວທສ ໄດ້ໂດຍພື້ນຖານ; ພ້ອມກັນນັ້ນ, ກໍຍັງໄດ້ຊີ້ໃຫ້ເຫັນບັນຫາຄົງຄ້າງຕົ້ນຕໍ, ສາເຫດທີ່ພາໃຫ້ມີຈຸດອ່ອນ ແລະ ຖອດຖອນໄດ້ບົດຮຽນຈຳນວນໜຶ່ງ ເພື່ອສືບຕໍ່ເສີມຂະຫຍາຍດ້ານດີ, ປັບປຸງຈຸດອ່ອນຄົງຄ້າງ ແລະ ກຳນົດທິດທາງ, ຄາດໝາຍສູ້ຊົນຈຳນວນໜຶ່ງແຕ່ປີ 2024-2029 ເພື່ອສ້າງຄວາມເຂັ້ມແຂງໜັກແໜ້ນດ້ານການເມືອງ-ແນວຄິດ, ການປັບປຸງການຈັດຕັ້ງຂອງສະຫະພັນແມ່ຍິງຮາກຖານ, ວຽກງານກໍ່ສ້າງພະນັກງານເພດຍິງ, ການໃຫ້ຄຳປຶກສາປົກປ້ອງສິດຜົນປະໂຫຍດແມ່ຍິງ-ເດັກນ້ອຍ, ສົ່ງເສີມຄວາມກ້າວໜ້າແມ່ຍິງແລະຄວາມສະເໝີພາບຍິງ-ຊາຍ, ການຈັດຕັ້ງປະຕິບັດຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ຂອງສູນກາງສະຫະພັນແມ່ຍິງລາວ, ປັບປຸງຄຸນນະພາບການເປັນເສນາທິການໃນການປະຕິບັດ3ພາລະບົດບາດຂອງກຳມາທິການວັດທະນະທຳ-ສັງຄົມ ໃຫ້ມີຄວາມໜັກແໜ້ນ.

ເພື່ອຮັບປະກັນບັນດາຄາດໝາຍທີ່ວາງອອກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າສູ່ຕົວຈິງນັ້ນ, ກອງປະຊຸມໄດ້ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານໄລຍະປີ 2024-2029 ໂດຍມອບໃຫ້ຄະນະສະຫະພັນແມ່ຍິງຮາກຖານ ແລະ ສະມາຊິກ ແມ່ຍິງພາຍໃນຮາກຖານ ຈັດຕັ້ງປະຕິບັດລະອຽດໃນແຕ່ລະປີ ແລະ ມີການປະສານສົມທົບຢ່າງກົມກຽວກັນລະຫວ່າງອົງການຈັດຕັ້ງມະຫາຊົນທີ່ຂຶ້ນກັບໜ່ວຍພັກຮາກຖານໃຫ້ປາກົດຜົນເປັນຈິງ; ກອງປະຊຸມຍັງໄດ້ຮັບຟັງບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງຮາກຖານກຳມາທິການວັດທະນະທຳ-ສັງຄົມແລະຕີລາຄາສູງຕໍ່ການນຳພາ ເຖິງວ່າໃນໄລຍະຜ່ານມາມີຄວາມຫຍຸ້ງຍາກ ແລະ ມີຫຼາຍດ້ານບໍ່ເອື້ອອຳນວຍ ແຕ່ກໍໄດ້ຍົກສູງຄວາມຮັບຜິດຊອບ, ມີຄວາມພະຍາຍາມແລະເປັນເຈົ້າການນຳພາ-ຊີ້ນຳ ການເຄື່ອນໄຫວຂອງໜ່ວຍແມ່ຍິງຮາກຖານ ໄດ້ຮັບຜົນສຳເລັດເປັນຢ່າງດີ.

ຜູ້ແທນກອງປະຊຸມ 10 ສະຫາຍ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕແລະຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກຮັບເລືອກຕັ້ງ5ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງຮາກຖານກຳ ມາທິການວັດທະນະທຳ-ສັງຄົມ ຊຸດທີ I ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ມະນີວັນ ລົດສົມພານ ເປັນປະທານ, ສະຫາຍ ນາງ ມະນີວັນ ລໍເຢຍຢ່າວ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ນາງ ມົວຢ່າງ ຢ່າງ ເປັນຄະນະ.

ສະຫາຍ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ, ການສ້າງຂະບວນການຕ່າງໆ ທີ່ບັນດາສະຫາຍສະມາຊິກແມ່ຍິງໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ. ພ້ອມກັນນີ້, ສະຫາຍຍັງໄດ້ເນັ້ນໜັກ ແລະ ໃຫ້ທິດຊີ້ນຳຕໍ່ສະມາຊິກແມ່ຍິງ ຕ້ອງໄດ້ເອົາໃຈໃສ່ບຸກບືນ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງເພີ່ມຕື່ມບາງບັນຫາ ໂດຍເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ດຳເນີນຊີວິດການເມືອງເປັນປະຈຳ ໂດຍຖືເອົາການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນແລະກັນ ເປັນປັດໄຈສຳຄັນ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ3ດີຂອງແມ່ຍິງລາວ ໂດຍຕິດພັນ ກັບຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ສະຫະພັນແມ່ຍິງຮາກຖານ ສາມາດຍາດໄດ້ ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ; ພ້ອມນັ້ນ, ກໍຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ຂອງແມ່ຍິງ ໃຫ້ເປັນຂະບວນຟົດຟື້ນ, ຊີ້ນຳ-ນຳພາສະມາຊິກແມ່ຍິງ ເຮັດລ້ອນໜ້າທີ່ເປັນເສນາທິການໃຫ້ການນຳ ກໍຄືກຳມາທິການວັດທະນະທຳ-ສັງຄົມໃນຕໍ່ໜ້າໃຫ້ມີໝາກຜົນອັນຈົບງາມ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກອງປະຊຸມໃຫຍ່ຄັ້ງທີ II ສະຫະພັນແມ່ຍິງຮາກຖານ ກກໝ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການກົດໝາຍ (ກກໝ) ໂດຍການເປັນປະທານຮ່ວມຂອງສະຫາຍ ອຳໄພ ຈິດມານິນ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງເລຂາໜ່ວຍພັກຮາກຖານກຳມາທິການກົດໝາຍ, ສະຫາຍ ນາງ ກິ່ງນະຄອນ ຈັນທະກຸມມານ ກຳມະການຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ (ສພຊ) ແລະ ສະຫາຍ ນາງ ຖະໜອມຈິດ ໂຄດພູທອນ ຫົວໜ້າໜ່ວຍແມ່ຍິງຮາກຖານກຳມາທິການກົດໝາຍ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 12 ກໍລະກົດ 2024 ທີ່ຫ້ອງຖະແຫຼງຂ່າວຂອງສພຊເຊິ່ງມີບັນດາສະຫາຍຕາງໜ້າສະຫະພັນ ແລະ ໜ່ວຍແມ່ຍິງຮາກຖານພາຍໃນສພຊ, ອົງການຈັດຕັ້ງມະຫາຊົນຮາກຖານ ກກໝ ເຂົ້າຮ່ວມ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ, ທິດທາງຄາດໝາຍສູ້ຊົນແຕ່ລະດ້ານ ແລະ ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງຮາກຖານກຳມາທິການກົດໝາຍຊຸດເກົ່າ ໃນນັ້ນ, ໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບາງບົດຮຽນທີ່ຖອດຖອນໄດ້ ໃນການຊີ້ນຳ-ນຳພາ ແລະ ການ ຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ(2018-2024) ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ດີຂຶ້ນກວ່າເກົ່າ; ພ້ອມນີ້, ຍັງໄດ້ຮັບຮອງເອົາທິດທາງແຜນການນັບແຕ່ປີ 2024-2030 ແລະ ມາດຕະການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ຜູ້ແທນກອງປະຊຸມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂທີ່ກຳນົດໄວ້ເຊິ່ງມີຜູ້ສະໝັກ 5ສະຫາຍ, ເລືອກໄດ້3ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງຮາກຖານກຳມາທິການກົດໝາຍຊຸດທີII ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ຖະໜອມຈິດ ໂຄດພູທອນ ເປັນປະທານ, ສະຫາຍ ນາງ ອະພິສອນ ພົງສາ ເປັນຮອງປະທານ ທັງເປັນປະທານກວດກາ ແລະ ສະຫາຍ ນາງ ຄຳຜາຍທຳມະວົງ ເປັນຄະນະ.

ກອງປະຊຸມໄດ້ຟັງການໂອ້ລົມ ແລະ ທິດຊີ້ນຳຂອງສະຫາຍ ອຳໄພ ຈິດມານິນ ເຊິ່ງໄດ້ຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວແລະການສ້າງຂະບວນການຕ່າງໆ ທີ່ບັນດາສະຫາຍສະມາຊິກແມ່ຍິງໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ. ພ້ອມກັນນີ້, ກໍໄດ້ເນັ້ນໜັກຕໍ່ສະມາຊິກແມ່ຍິງເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ; ດຳເນີນຊີວິດການເມືອງເປັນປະຈຳ ໂດຍຖືເອົາການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນແລະກັນເປັນປັດໄຈສຳຄັນ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ 3 ດີຂອງແມ່ຍິງລາວ ໂດຍຕິດພັນກັບຂໍ້ແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ໃຫ້ເປັນຂະບວນຟົດຟື້ນ. ນອກຈາກນີ້, ຍັງຍ້ຳຕື່ມໃຫ້ຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ຈົ່ງເສີມຂະຫຍາຍດ້ານດີແລະຜັນຂະຫຍາຍມະຕິ, ຄຳສັ່ງຂອງຂັ້ນເທິງໃຫ້ມີປະສິດທິຜົນ.

**(ນາງ ອາລິນ ສຸພົມມະປະກິດ)**

# ກອງປະຊຸມໃຫຍ່ຄັ້ງທີ II ສະຫະພັນແມ່ຍິງຮາກຖານ ກຜງສ




(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໄດ້ຈັດຂຶ້ນເມື່ອວັນທີ12ກໍລະກົດຜ່ານມາທີ່ຫ້ອງຖະແຫຼງຂ່າວຂອງສະພາແຫ່ງຊາດ (ສພຊ) ພາຍໃຕ້ການເປັນທານຮ່ວມຂອງສະຫາຍ ທັນຕາ ກອງຜາລີ ຮອງເລຂາໜ່ວຍພັກຮາກຖານກຳມາທິການແຜນການ, ການເງິນແລະການກວດສອບ, ສະຫາຍ ນາງ ມະນີວັນ ເຍຍປາວເຮີ ກຳມະການຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ, ສະຫາຍ ນາງ ເຢີຊົງ ປັດໃຈ ຮອງຫົວໜ້າໜ່ວຍແມ່ຍິງຮາກຖານ ກຜງສ ໂດຍມີບັນດາສະຫາຍຕາງໜ້າສະຫະພັນ ແລະ ໜ່ວຍແມ່ຍິງຮາກຖານພາຍໃນ ສພຊ ເຂົ້າຮ່ວມ.

ຫຼັງຈາກຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ກົງໄປກົງມາ; ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາບົດລາຍງານການເມືອງ ເຊິ່ງໄດ້ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງໜ່ວຍແມ່ຍິງຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບໃນໄລຍະ7ປີຜ່ານມາແລະທິດທາງແຜນການ ແຕ່ປີ 2025-2030.

ຜູ້ແທນກອງປະຊຸມ 11 ສະຫາຍ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຕະຖານ, ເງື່ອນໄຂທີ່ໄດ້ກຳນົດໄວ້ໃນລະບຽບຂອງສູນກາງສະຫະພັນແມ່ຍິງລາວ ເຊິ່ງມີຜູ້ສະໝັກເລືອກຕັ້ງ 5 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບຊຸດທີII ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ບົວວອນ ສົມສະນິດ ເປັນປະທານ, ສະຫາຍ ນາງປະກາຍພູມອຸປຣະຈັນເປັນຮອງປະທານແລະປະທານກວດກາ, ສະຫາຍ ນາງ ວິໄລພອນ ແສນຄຳຕາ ເປັນຄະນະ.

ກອງປະຊຸມໄດ້ຮັບຟັງຄຳໂອ້ລົມ ແລະ ທິດຊີ້ນຳຈາກສະຫາຍ ທັນຕາ ກອງຜາລີ ເຊິ່ງໄດ້ມີຄຳເຫັນໃຫ້ຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ເອົາໃຈໃສ່ຊີ້ນຳ-ນຳພາການເມືອງ-ແນວຄິດ, ຕັ້ງໜ້າສຶກສາອົບຮົມສະມາຊິກໃຫ້ມີຄຸນທາດການເມືອງໜັກແໜ້ນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຕົນ; ຕິດຕາມກວດກາສະມາຊິກແມ່ຍິງພາຍໃນກຳມາທິການຢ່າງໃກ້ຊິດ ເພື່ອສົ່ງເສີມດ້ານຕັ້ງໜ້າ, ດ້ານດີ ແລະ ແກ້ໄຂຈຸດອ່ອນໃຫ້ທັນເວລາ. ພ້ອມນັ້ນ, ສະຫາຍຍັງຮຽກຮ້ອງສະມາຊິກແມ່ຍິງພາຍໃນຮາກຖານ ຕ້ອງປະຕິບັດຕາມມະຕິຄຳສັ່ງ, ລະບຽບການ, ຂໍ້ກຳນົດຢູ່ພາຍໃນສະພາແຫ່ງຊາດ ໃຫ້ເຂັ້ມງວດ; ໃນຍຸກແຫ່ງການເຊື່ອມໂຍງທີ່ມີທັງສິ່ງທີ່ເປັນກາລະໂອກາດ ແລະ ສິ່ງທ້າທາຍຫຼາຍປະການ, ຕ້ອງຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງໃນການບໍລິໂພກຂໍ້ມູນຂ່າວສານ.

**(ນາງ ອາລິນ ສຸພົມມະປະກິດ)**

## ເຜີຍແຜ່ກົດໝາຍ...

(ຕໍ່ຈາກໜ້າ 1)

ແໜງການຂັ້ນທ້ອງຖິ່ນ ໂດຍສະເພາະແມ່ນອົງການຈັດຕັ້ງລັດ ແລະ ພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານການແກ້ໄຂຄຳຮ້ອງທຸກ, ເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ເນື້ອໃນກົດໝາຍດັ່ງກ່າວ ເປັນຕົ້ນ: ຄວາມໝາຍແລະປະເພດຂອງຄຳຮ້ອງທຸກ, ສິດ ແລະ ໜ້າທີ່, ຂັ້ນຕອນ ແລະ ວິທີການແກ້ໄຂ, ຄວາມຮັບຜິດຊອບຂອງອົງການທີ່ແກ້ໄຂຄຳຮ້ອງທຸກໃນແຕ່ລະປະເພດ ຄື: ຄຳສະເໜີ, ຄຳຮ້ອງຟ້ອງແລະຄຳຮ້ອງຂໍຄວາມເປັນທຳແນໃສ່ເຮັດໃຫ້ອົງການຈັດຕັ້ງລັດແລະພາກສ່ວນຕ່າງໆໃນສັງຄົມ ມີຄວາມຮັບຮູ້ເຂົ້າໃຈເປັນເອກະພາບກັນໃນການນຳໃຊ້ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກໃນໄລຍະຜ່ານມາ, ກົດໝາຍດັ່ງກ່າວ ໄດ້ກາຍເປັນເຄື່ອງມືສຳຄັນໃຫ້ແກ່ອົງການຈັດຕັ້ງລັດທີ່ຮັບຜິດຊອບແກ້ໄຂຄຳຮ້ອງທຸກ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ເປັນຢ່າງດີທັງເປັນການສ້າງເງື່ອນໄຂໃຫ້ປະຊາຊົນສາມາດເຂົ້າເຖິງຂະບວນການຍຸຕິທຳຫຼາຍຂຶ້ນ; ສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການປົກປ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ ອັນເປັນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

ນອກຈາກນັ້ນ, ຍັງໄດ້ມອບປຶ້ມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ແຜ່ນພັບ ແລະ ໂປສເຕີ ກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຈຳນວນໜຶ່ງ ໃຫ້ແກ່ສະພາປະຊາຊົນແຂວງ, ເມືອງແລະບ້ານເພື່ອເອົາໄປນຳໃຊ້ເປັນບ່ອນອີງໃນການປະຕິບັດວຽກງານ ແລະ ເຜີຍແຜ່ຕໍ່ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້.

**(ນາງ ກຸກກິກ ບຸດດາໄຊ)**

## ປັບປຸງມະຕິ...

(ຕໍ່ຈາກໜ້າ 1)

ທານສະພາແຫ່ງຊາດ; ມີບັນດາທ່ານລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ປະທານ-ຮອງປະທານກຳມາທິການບັນດາເຜົ່າ, ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ ແລະ ພະນັກງານທີ່ກ່ຽວຂ້ອງ ເຂົ້າຮ່ວມ 35 ທ່ານ.

ກອງປະຊຸມໄດ້ຮັບຟັງການສະເໜີໂດຍສັງລວມຜົນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄລຍະຜ່ານມາ ແລະ ຜ່ານຮ່າງມະຕິຕໍ່ກອງປະຊຸມ. ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນແລະປຶກສາຫາລືຕໍ່ເນື້ອໃນຂອງຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄລຍະຜ່ານມາ, ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ82/ສພຊ, ລົງວັນທີ 30 ທັນວາ 2022 ແລະ ທິດທາງແຜນ ການປີ 2024 ເພື່ອເຮັດໃຫ້ຮ່າງມະຕິສະບັບດັ່ງກ່າວມີເນື້ອໃນສອດຄ່ອງກັບຄຳສັ່ງຂອງກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີການນຳພາຊີ້ນຳຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ສະບັບເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ແລະ ບົດແນະນຳຂອງຫ້ອງວ່າການສູນກາງພັກວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ກ່ຽວກັບການຜັນຂະຫຍາຍຜົນສຳເລັດກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກຮອບດ້ານ ແລະ ວຽກງານ 3 ສ້າງ ສະບັບເລກທີ 02/ຫສພ, ລົງວັນທີ 21 ກຸມພາ 2023 ເພື່ອເຮັດໃຫ້ຮ່າງມະຕິມີເນື້ອໃນຮັດກຸມ, ຖືກຕ້ອງ, ຄົບຖ້ວນ, ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນສູງກວ່າເກົ່າ.

**(ສອນສັກ ວັນວິໄຊ)**

## ຄະນະປະຈຳ ສພຂ ອຸດົມໄຊ ພິຈາລະນາຫຼາຍບັນຫາສຳຄັນ



(ສພຊ)-ຕອນເຊົ້າຂອງວັນທີ28 ມິຖຸນາ2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມຄະນະປະຈຳ ສພຂ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງແຂວງ, ປະທານ ສພຂ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການ, ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ.

ກອງປະຊຸມໃນຄັ້ງນີ້, ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງ, ໃນກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການຄົ້ນຄວ້າໜັງສືສະເໜີ ເຈົ້າແຂວງເລກທີ 888/ອຊ, ລົງວັນທີ 6/6/2024 ກ່ຽວກັບແຜນການນຳໃຊ້ງົບປະມານລົງທຶນຂອງລັດ (ຮ່ວງກອງທຶນບູລະນະຮັກສາ ແລະ ສ້ອມແປງທາງຫຼວງທ້ອງຖິ່ນ)ປະຈຳປີ2024; ບົດລາຍງານການຄົ້ນຄວ້າໜັງສືສະເໜີເຈົ້າແຂວງ ເລກທີ 967/ອຊ, ລົງວັນທີ20/6/2024ແຜນການລົງທຶນຂອງລັດ (ທຶນພັດທະນາຊຸມຊົນ); ບົດລາຍງານການຄົ້ນຄວ້າການອອກມະຕິລົບລ້າງມະຕິຂອງກອງປະຊຸມສພຂເລກທີ33/ສພຂ.ອຊ,ລົງວັນທີ12/1/2021 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການກຳນົດຫົວໜ່ວຍລາຄາທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕາມແຜນຍຸດທະສາດຂອງເມືອງໄຊ ແຂວງອຸດົມໄຊ; ບົດລາຍງານການຄົ້ນຄວ້າໜັງສືສະເໜີເຈົ້າແຂວງ ເລກທີ 918/ອຊ, ລົງວັນທີ 12/6/2024 ການຫັນປ່ຽນປະເພດທີ່ດິນກະສິກຳມາເປັນດິນປຸກສ້າງທີ່ຢູ່ອາໄສ ແລະ ດິນປຸກສ້າງ ເພື່ອການບໍລິການທາງການຄ້າ ຢູ່ເມືອງໄຊ ແລະ ເມືອງນາໝໍ້ ແຂວງອຸດົມໄຊ. ຫຼັງຈາກນັ້ນ, ບັນດາທ່ານຄະນະປະຈຳ ສພຂ ໄດ້ສຸມໃສ່, ຄົ້ນຄວ້າປະກອບຄຳຄິດຄຳເຫັນແລກປ່ຽນ ແລະ ຜູ້ຕາງໜ້າພະແນກການໄດ້ຊີ້ແຈງເພີ່ມຕື່ມ ແລະ ໃນຕອນບ່າຍຂອງວັນດຽວກັນ ຍັງໄດ້ຜ່ານມະຕິກອງປະຊຸມຂອງຄະນະປະຈຳ ສພຂ ອຸດົມໄຊ ວ່າດ້ວຍການຮັບຮອງເອົາການຍົກຍ້າຍທ່ານ ທອງຄານ ວັດສະດາກອນ ຄະນະປະຈຳ ສພຂ, ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄປປະຈຳຢູ່ຫ້ອງວ່າການເມືອງງາ ແຂວງອຸດົມໄຊ.

**(ສີແຫວງ ສີບຸນເຮືອງ)**

## ຕິດຕາມກວດກາແລະຊຸກຍູ້ວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງຫຼວງພະບາງ



(ສພຊ) - ໃນລະຫວ່າງວັນທີ 16 ມິຖຸນາ-2 ກໍລະກົດ 2024 ທ່ານ ສົງຕັນ ໄຊລືຊົ່ງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດພາລະບົດບາດ, ສິດໜ້າທີ່ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກເມືອງ-ນະຄອນ, ເພື່ອຍົກສູງຄຸນນະພາບ ກົນໄກການພົວພັນປະສານງານການເຮັດວຽກຮ່ວມກັນລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳ 11 ເມືອງ ແລະ 1 ນະຄອນ ໃຫ້ມີຄວາມກົມກຽວສູງກວ່າເກົ່າ. ກອງປະຊຸມດັ່ງກ່າວເຂົ້າຮ່ວມມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ ພ້ອມດ້ວຍພະນັກງານວິຊາການ ແລະ ຄະນະຮັບຜິດຊອບຈາກສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວການຈັດຕັ້ງປະຕິບັດ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ສະບັບເລກທີ89/ຄປຈ, ລົງວັນທີ 6 ຕຸລາ 2022, ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະວຽກງານອື່ນໆຈຳນວນໜຶ່ງເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ກອງປະຊຸມສະພາ ແລະ ເປັນການຕິດຕາມກວດກາການເຄົາລົບ ແລະ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກ.

ໃນຕອນທ້າຍ, ປະທານກອງປະຊຸມ ກໍໄດ້ມີຄຳເຫັນຊີ້ນຳ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມເພື່ອເປັນເຂັມຊີ້ທິດ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳ 11 ເມືອງ, 1 ນະຄອນແລະບັນດາຂະແໜງການທີ່ກ່ຽວຂ້ອງຂອງເມືອງຕື່ມອີກ.

**(ວິລິຍະ ວັນນະສີ)**

## ສະຫະພັນແມ່ຍິງຮາກຖານ ສພຂ ສາລະວັນ ກະກຽມກອງປະຊຸມໃຫຍ່ຄັ້ງທີ IV



(ສພຊ) - ເມື່ອບໍ່ດົນມານີ້, ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມເອກະສານກະກຽມກອງປະຊຸມໃຫຍ່ຄັ້ງທີIV ທີ່ຫ້ອງປະຊຸມສພຂຕິດພັນກັບການປ່ອນບັດທາບທາມເປີດກວ້າງ ຄັດເລືອກເອົາບຸຄະລາກອນ ຮອບທີ I ໂດຍການເປັນປະທານຂອງສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສພຂ; ເຂົ້າຮ່ວມມີປະທານ-ຮອງປະທານສະຫະພັນແມ່ຍິງຮາກຖານ ສພຂ, ບັນດາສະຫາຍສະມາຊິກແມ່ຍິງຮາກຖານ.

ກອງປະຊຸມໄດ້ຮັບຟັງການສະເໜີຜ່ານເອກະສານ 3 ສະບັບຄື: ແຜນການກະກຽມ ແລະ ດຳເນີນງານກອງປະຊຸມໃຫຍ່ ຄັ້ງທີ IV ສະຫະພັນແມ່ຍິງຮາກຖານ ສພຂ; ມະຕິຂອງຄະນະພັກຮາກຖານ ສພຂ ວ່າດ້ວຍການແຕ່ງຕັ້ງ ຄະນະຊີ້ນຳລວມແລະອະນຸກຳມະການຊ່ວຍວຽກ ເພື່ອກະກຽມດຳເນີນເປີດກອງປະຊຸມໃຫຍ່ ຄັ້ງທີ IV ສະຫະພັນແມ່ຍິງຮາກຖານ ສພຂ ແລະ ບົດລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີIVຂອງສະຫະພັນແມ່ຍິງຮາກຖານສພຂ; ພ້ອມດຽວກັນ, ບັນດາສະຫາຍສະມາຊິກແມ່ຍິງຮາກຖານ ໄດ້ປະກອບສ່ວນແລກປ່ຽນປະກອບຄຳຄິດຄຳເຫັນເຂົ້າໃສ່ຮ່າງຂອງບົດລາຍການດັ່ງກ່າວ ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ ແລະ ສອດຄ່ອງກັບແຜນວຽກຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ III ໃນໄລຍະ 5 ປີຜ່ານມາ (2018-2023); ຈາກນັ້ນ, ທີ່ປະຊຸມກໍຮັບຟັງການສະເໜີເອກະສານມາດຕະຖານຂອງຜູ້ສະໝັກເຂົ້າໂຄງປະກອບ, ບຸຄະລາກອນ ຄະນະປະທານສະຫະພັນແມ່ຍິງຮາກຖານຂອງ ສພຂ ມີ 2 ມາດຕະຖານຄື: ມາດຕະຖານລວມ ແລະ ມາດຕະຖານສະເພາະ ທີ່ໄດ້ກຳນົດໄວ້ມະຕິຂອງກົມການເມືອງ ສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 3 ມັງກອນ 2018.

ວາລະຂອງກອງປະຊຸມຕໍ່ມາ ບັນດາສະຫາຍສະມາຊິກແມ່ຍິງຮາກຖານ ສພຂ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດທາບທາມເປີດກວ້າງ ເພື່ອຄັດເລືອກເອົາບຸຄະລາກອນ ຮອບທີ I ເພື່ອປະກອບເຂົ້າໃສ່ໂຄງປະກອບ, ບຸຄະລາກອນ ແລະ ຄະນະປະທານສະຫະພັນແມ່ຍິງຮາກຖານຂອງ ສພຂ.

ຫຼັງຈາກນັ້ນ, ສະຫະພັນແມ່ຍິງຮາກຖານ ສພຂ ສາລະວັນ ຍັງໄດ້ດຳເນີນກອງປະຊຸມທ້າຍສະໄໝ ຄັ້ງທີ III ປີ 2018-2023 ຢ່າງເປັນທາງການ ໂດຍການເປັນປະທານຂອງສະຫາຍນາງ ນົກວິທະຍາ ພັນທະວົງ ປະທານສະຫະພັນແມ່ຍິງຮາກຖານ ສພຂ ສາລະວັນ; ເຂົ້າຮ່ວມໂດຍສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານ ສພຂ, ເຂົ້າຮ່ວມມີຄະນະສະຫະພັນແມ່ຍິງຮາກຖານ ສພຂ, ບັນດາສະຫາຍສະມາຊິກແມ່ຍິງ, ຕາງໜ້າຈາກອົງການຈັດຕັ້ງກຳມະບານຮາກຖານ ແລະ ໜ່ວຍຮາກຖານຊາວໜຸ່ມ ສພຂ.

ກອງປະຊຸມໄດ້ຜ່ານຮ່າງບົດສຳຫຼວດການນຳພາລວມ; ຮ່າງບົດລາຍງານການເມືອງຂອງສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ IV ; ຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງຮາກຖານສະພາປະຊາຊົນແຂວງ ໄລຍະ 5 ປີ (2018-2023) ແລະທິດທາງແຜນການ ໄລຍະ 5 ປີ (2024-2028) ຜ່ານມາ ເຊິ່ງສະຫະພັນແມ່ຍິງຮາກຖານ ສພຂ ໄດ້ຈັດຕັ້ງເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງລາວ ກໍຄືແຜນພັດທະນາແມ່ຍິງແຂວງສາລະວັນ ໄລຍະ 5 ປີ 2016-2020 ຈຳນວນ 7 ແຜນງານ 23 ໂຄງການ, ຫັນເປັນແຜນພັດທະນາແມ່ຍິງສະພາປະຊາຊົນແຂວງ ເຊິ່ງລວມມີ 3 ແຜນງານ 7 ໂຄງການ ໄດ້ເຮັດໃຫ້ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ສາມາດຜ່ານຜ່າອຸປະສັກ, ຂໍ້ຫຍຸ້ງຍາກແລະບັນລຸຜົນສຳເລັດຕາມລະດັບຄາດໝາຍໃນແຕ່ລະດ້ານ; ພ້ອມດຽວກັນ ບັນດາສະຫາຍສະມາຊິກແມ່ຍິງ ໄດ້ພ້ອມກັນສຸມໃສ່ປະກອບຄຳຄິດເຫັນເຈາະຈີ້ມຢ່າງກົງໄປກົງມາຕໍ່ຮ່າງບົດລາຍງານການເມືອງ, ຮ່າງບົດສຳຫຼວດການນຳພາລວມ ແລະຮ່າງບົດສະຫຼຸບແຜນພັດທະນາແມ່ຍິງ ຢ່າງເປັນຂະບວນຟົດຟື້ນ ທັງນີ້, ກໍເພື່ອເຮັດໃຫ້ເນື້ອໃນມີຄວາມສົມບູນຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບຫຼັກການ; ວາລະຕໍ່ມາ ສະຫະພັນແມ່ຍິງຮາກຖານ ໄດ້ແບ່ງຈຸສຳຫຼວດອອກເປັນ 2 ຈຸ ເປີດກອງປະຊຸມເພື່ອເປັນການດຳເນີນຊີວິດການເມືອງພາຍໃນຮາກຖານ, ຕຳນິສິ່ງຂ່າວ, ສຳຫຼວດກວດກາຕີລາຄາຄວາມຮັບຜິດຊອບຂອງບຸກຄົນສະມາຊິກແມ່ຍິງ ຕະຫຼອດໄລຍະທີ່ຜ່ານມາ;

ຕອນທ້າຍ, ບັນດາສະຫາຍສະມາຊິກແມ່ຍິງຮາກຖານ ໄດ້ໃຊ້ສິດຂອງຕົນບ່ອນບັດທາບທາບບຸຄະລາກອນທີ່ຈະລົງສະໝັກຮອບສອງ ກ່ອນການເລືອກຕັ້ງກອງປະຊຸມໃຫຍ່ ຄັ້ງທີ IV ຂອງສະຫະພັນແມ່ຍິງຮາກຖານ ສພຂ ທີ່ຈະມາເຖິງໄວໆນີ້.

**(ດີລຳພົນ ພົມມະຈັນ)**

# ສພຂ ວຽງຈັນ ຖະແຫຼງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7

(ສພຊ) ໃນຕອນເຊົ້າຂອງວັນທີ 10 ກໍລະກົດ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ວຽງຈັນ, ທ່ານ ບຸນສອນ ເພັດລາວັນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ10ແຂວງວຽງຈັນ ໄດ້ຕາງໜ້າໃຫ້ຄະນະສະມາຊິກສະພາປະຊາຊົນແຂວງວຽງຈັນ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນຂອງແຂວງ ເຊິ່ງທ່ານໄດ້ກ່າວວ່າ: ໃນນາມປະທານຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ມີຄວາມຍິນດີແລະຖືເປັນກຽດຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີIX ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ຜູ້ປະກອບການແລະ ປະຊາຊົນບັນດາເຜົ່າທົ່ວແຂວງວຽງຈັນຮັບຊາບຢ່າງທົ່ວເຖິງ.

ປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງປີ 2020) ກ່ຽວກັບການດຳເນີນກອງປະຊຸມສະໄໝສາມັນປະຈຳ 6 ເດືອນ ຕົ້ນປີຂອງສະພາແຫ່ງຊາດກອງປະຊຸມໄດ້ດຳເນີນເປັນເວລາ 17 ວັນ ແຕ່ວັນທີ 10 ມິຖຸນາ ຫາວັນທີ 2 ກໍລະກົດ 2024 ພາຍໃຕ້ການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ກອງປະຊຸມໄດ້ເປັນກຽດຢ່າງສູງຂໍ່ານັບຮັບຕ້ອນທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງສປປ ລາວ ແລະ ເຂົ້າຮ່ວມການນຳພັກ-ລັດຂັ້ນສູງ, ບັນດາສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນນັກສຶກສາ, ຫົວໜ່ວຍທຸລະກິດ ແລະ ມີບັນດາສະມາຊິກສະພາແຫ່ງຊາດ 18 ເຂດເລືອກຕັ້ງທົ່ວປະເທດເຂົ້າຮ່ວມຢ່າງພ້ອມພຽງ.



ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນທີ່ເປັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນການ 6 ເດືອນ ທ້າຍປີ 2024.

2. ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາແລະກຳນົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ2030.

3. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດສະບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022.

4. ບົດລາຍງານຂອງອົງການກວດສອບແຫ່ງລັດກ່ຽວກັບການແກ້ໄຂຜົນການກວດສອບ ປະຈຳປີ 2022.

5. ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX.

6. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 13 ສະບັບໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບ; ກົດໝາຍປັບປຸງ 11 ສະບັບຄື:

ກົດໝາຍສ້າງໃໝ່2ສະບັບ: ກົດໝາຍວ່າດ້ວຍສະຫະກອນ ແລະ ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ.

ກົດໝາຍປັບປຸງ11ສະບັບ: ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, ກົດໝາຍວ່າດ້ວຍການທ່ອງທ່ຽວ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ນອກຈາກນັ້ນ, ຍັງໄດ້ຮັບຟັງການລາຍງານກ່ຽວກັບການກະກຽມປັບປຸງບາງເນື້ອໃນລັດຖະທຳມະນູນແຫ່ງສປປລາວລະບັບປີ 2015 ໂດຍກົມການເມືອງສູນກາງພັກ ໄດ້ອອກມະຕິແຕ່ງຕັ້ງຄະນະກຳມະການລະດັບຊາດການປັບປຸງລັດຖະທຳມະນູນປີ2015ໂດຍໄດ້ມີການສ້າງແຜນການເຄື່ອນໄຫວ,ແຜນດຳເນີນງານ, ແຜນງານການແບ່ງຄວາມຮັບຜິດຊອບພາຍໃນຄະນະ, ວຽກຈຸດສຸມຂອງການປັບປຸງລັດຖະທຳມະນູນເພື່ອສາມາດນຳເຂົ້າພິຈາລະນາແລະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີIX ຕາມຄາດໝາຍວາງໄວ້.

ກອງປະຊຸມໄດ້ຮັບຟັງລາຍງານຜົນການພິຈາລະນາແລະຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດສະໄໝວິສາມັນ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ກ່ຽວກັບການພິຈາລະນາການຍົກຍ້າຍທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄປຮັບໜ້າທີ່ໃໝ່ຢູ່ແຂວງຫຼວງພະບາງ ຕາມຄຳສະເໜີຂອງທ່ານນາຍົກລັດຖະມົນຕີ; ການປັບປຸງບຸຄະລາກອນພາຍໃນສະພາແຫ່ງຊາດຄື: 1. ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ,ບໍ່ຄວບເປັນປະທານກຳມາທິການກົດໝາຍ, 2. ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ເປັນປະທານກຳມາທິການກົດໝາຍສະພາແຫ່ງຊາດ, 3. ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ເປັນປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ. ຮັບຮອງເອົາການເລືອກຕັ້ງເອົາທ່ານ ບຸນຕາ ເທບພະວົງ ຮອງປະທານກຳມາທິການແຜນການ, ການເງິນແລະການກວດສອບ ເປັນກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ເປັນປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ.

ໃນວາລະການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີIX ສະພາແຫ່ງຊາດໄດ້ສະເໜີໃຫ້ 16 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມ ກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງສະມາຊິກສະພາແຫ່ງຊາດ ໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການ ທີ່ກ່ຽວຂ້ອງ.

ໃນໂອກາດດຽວກັນ, ກອງປະຊຸມຍັງໄດ້ຈັດພິທີສະເຫຼີມສະຫຼອງວັນລັດຖະສະພາໂລກຄົບຮອບ 135 ປີ ດ້ວຍການອ່ານບົດຊົມເຊີຍໂດຍປະທານສະພາແຫ່ງຊາດທັງເປັນປະທານສະຫະພັນລັດຖະສະພາສາກົນແຫ່ງ ສປປ ລາວ ແລະ ຈັດພິທີເປີດເວັບໄຊກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ຢ່າງເປັນທາງການ ເພື່ອລາຍງານກ່ຽວກັບຄວາມພ້ອມທີ່ສປປລາວເປັນເຈົ້າພາບໃນທ້າຍປີນີ້.

ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງປະຊຸມ ມີປະຊາຊົນບັນດາເຜົ່າ ສົ່ງຄຳຄິດຄຳເຫັນ ຜ່ານໂທລະສັບສາຍດ່ວນ (156) ຫຼາຍກວ່າ 860 ສາຍ, ມີ 455 ເລື່ອງ ເຊິ່ງພົວພັນເຖິງສະພາບການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນບັນຫາໄພເງິນເຟີ້, ອັດຕາແລກປ່ຽນເໜັງຕີງແຮງ, ຄ່າຄອງຊີບສູງຂຶ້ນ, ການຄຸ້ມຄອງບໍລິຫານລັດ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະສິ່ງແວດລ້ອມ; ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມານັ້ນ, ກອງເລຂາກອງປະຊຸມໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ອີກເທື່ອໜຶ່ງ ຕາງໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງບັນດາທ່ານສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນບັນດາເຜົ່າຊາວແຂວງວຽງຈັນ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້.

**(ນາງ ບຸລາຕີ ແສນທະວົງ)**

## ອົບຮົມການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ໃຫ້ພະນັກງານ ສພຂ ຊຽງຂວາງ



(ສພຊ) - ໃນວັນທີ 3 ກໍລະກົດ2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມເຝິກອົບຮົມການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ໃຫ້ພະນັກງານ ສພຂ ຊຽງຂວາງ ໂດຍການເປັນປະທານຂອງທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການ ສພຂ; ມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ.

ເພື່ອເປັນການຍົກຂີດຄວາມສາມາດໃຫ້ແກ່ພະນັກງານ ສພຂ ໃນການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ແລະ ເປັນການແນະນຳວິທີນຳໃຊ້ລະບົບເຄືອຂ່າຍພາຍໃນ ໃຫ້ແກ່ພະນັກງານ-ລັດຖະກອນສພຂ ໄດ້ຮັບຮູ້,ເຂົ້າໃຈໃນການນຳໃຊ້ລະບົບເຄື່ອຂ່າຍພາຍໃນຂອງສະພາແຫ່ງຊາດ ເພື່ອສະດວກໃນການຊອກຫາຂໍ້ມູນຕ່າງໆຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຂົ້າໃນການຈັດຕັ້ງປະຕິບັດວຽກງານຂອງຕົນ. ກອງປະຊຸມໄດ້ຮັບຟັງການສະເໜີວິທີການສະໝັກການນຳໃຊ້ລະບົບເຄືອຂ່າຍພາຍໃນສະພາແຫ່ງຊາດ, ການເຂົ້າເຖິງ ແລະ ຊອກຫາເອກະສານ ແລະ ນິຕິກຳຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງແລະບັນດາອົງການລັດ ໃນລະບົບເຄືອຂ່າຍພາຍໃນ. ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນຖາມ-ຕອບຢ່າງກົງໄປກົງມາທັງໄດ້ລົງທະບຽນສະໝັກເຂົ້ານຳໃຊ້ເຄືອຂ່າຍດັ່ງກ່າວ ແລະ ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ ແລະ ຊອກຄົ້ນບັນດາເອກະສານທີ່ຕ້ອງການ ສາມາດເຂົ້າໃຈຢ່າງຈະແຈ້ງແລະນຳໃຊ້ໄດ້ຢ່າງຄ່ອງຕົວ ຮັບປະກັນໃນການຄົ້ນຄວ້າ ແລະສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ ແລະ ໄດ້ຮັບຂໍ້ມູນຖືກຕ້ອງ ໃຫ້ແກ່ ສສຊ ແລະ ສສຂ.

ໃນຕອນທ້າຍ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ໄດ້ຍ້ອງຍໍຊົມເຊີຍຕໍ່ກັບຄະນະຮັບຜິດຊອບກອງປະຊຸມທີ່ໄດ້ກະກຽມບັນດາເນື້ອໃນຕ່າງໆ ແລະ ທ່ານໄດ້ຮຽກຮ້ອງມາຍັງພະນັກງານ-ລັດຖະກອນທັງໝົດຈົ່ງພ້ອມກັນນຳເອົາ ເນື້ອໃນຫົວຂໍ້ທີ່ຝຶກອົບຮົມໃນຄັ້ງນີ້ ໄປຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ແລະ ສາມາດນຳໃຊ້ເຂົ້າໃນໜ້າທີ່ວຽກງານໃຫ້ມີຜົນສຳເລັດເປັນຢ່າງດີ.

**(ນາງ ສຸກສະຫວັນ ອິນທະແສງ)**

# ຖະແຫຼງຂ່າວກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງສະຫວັນນະເຂດ




(ສພຊ) - ໃນວັນທີ 12 ກໍລະກົດ 2024 ທີ່ຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ທ່ານ ພູທອນ ພຸດທະຂັນຕິ ຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນວ່າ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ຈະດຳເນີນຂຶ້ນໃນລະຫວ່າງວັນທີ 24-26 ກໍລະກົດ 2024 ທີ່ຫໍວັດທະນະທຳໄກສອນພົມວິຫານ ເພື່ອພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງແຂວງດັ່ງນີ້:

**ວຽກອົງການປົກຄອງແຂວງ**

1. ພິຈາລະນາ, ຮັບຮອງເອົາບົດລາຍງານທ່ານເຈົ້າແຂວງໆສະຫວັນນະເຂດກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ທ້າຍປີ 2024;

2. ຮັບຟັງການລາຍງານຈາກຫົວໜ້າພະແນກແຜນການ ແລະການລົງທຶນແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2024;

3. ຮັບຟັງການລາຍງານຈາກຫົວໜ້າພະແນກການເງິນແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2024;

4. ຮັບຟັງການລາຍງານຈາກທ່ານຫົວໜ້າທະນາຄານແຫ່ງສປປລາວພາກກາງແຂວງສະຫວັນນະເຂດ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024;

5. ພິຈາລະນາ,ຮັບຮອງເອົາບົດລາຍງານຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ກ່ຽວກັບຜົນການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະທິດທາງແຜນການໃນຕໍ່ໜ້າ;

6. ຮັບຟັງການລາຍງານຈາກຫົວໜ້າພະແນກພະລັງງານ ແລະບໍ່ແຮ່ແຂວງ ກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂຸດຄົ້ນແຮ່ທາດ ໃນໄລຍະຜ່ານມາ ແລະ ການກຳນົດແຜນການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃນຕໍ່ໜ້າ.

**ວຽກການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ**

ພິຈາລະນາ, ຮັບຮອງການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍຈຳນວນ 2 ສະບັບຄື: ຮ່າງຂໍ້ຕົກລົງຂອງເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງສະຫວັນນະເຂດ (ສ້າງໃໝ່) ແລະ ຮ່າງຂໍ້ຕົກລົງຂອງເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ (ສ້າງໃໝ່).

**ວຽກສະພາປະຊາຊົນແຂວງ**

1. ພິຈາລະນາ, ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ6ຫາກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຊຸດທີII.

ເພື່ອເປັນບ່ອນອີງໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນຕ່າງໆ ໃນການຈັດຕັ້ງປະຕິບັດກອງປະຊຸມເທື່ອນີ້ຈະໄດ້ຮັບຮອງເອົາມະຕິກອງປະຊຸມລວມມີ 6 ສະບັບ ຄື:

1) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 06 ເດືອນທ້າຍປີ 2024 ຂອງອົງການປົກຄອງແຂວງ;

2) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2024 ຂອງອົງການປົກຄອງແຂວງ.

3) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາຜົນການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະການແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ.

4) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II;

5) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງສະຫວັນນະເຂດ;

6) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ.

ອີກເທື່ອໜຶ່ງ ທ່ານເລຂາທິການສະພາປະຊາຊົນແຂວງໄດ້ເຊີນຊວນມາຍັງບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້, ນັກສຶກສາປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ຄ້າຊາວຂາຍ, ພໍ່ແມ່ພີ່ນ້ອງ ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນຈົ່ງຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນຄັ້ງນີ້. ພ້ອມດຽວກັນນີ້ ໃນໄລຍະດຳເນີນກອງປະຊຸມ ທ່ານສາມາດສະເໜີບັນຫາຕ່າງໆຜ່ານໂທລະສັບສາຍດ່ວນ 041 156 ເພື່ອຄະນະຮັບຜິດຊອບຈະສົ່ງໄປຍັງກອງປະຊຸມອີກດ້ວຍ.

# ເຝິກອົບຮົມການປະກອບຄຳເຫັນ ແລະ ຄຳຊັກຖາມໃນກອງປະຊຸມສະພາປະຊາຊົນແຂວງທີ່ເມືອງຍອດອູ



(ສພຊ) ປະຕິບັດຕາມແຜນວຽກປະຈຳປີ 2024 ຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ (STEPs) ສະບັບເລກທີ 129/ຄລຂ, ລົງວັນທີ 13 ມີນາ 2024, ແຜນດຳເນີນກິດຈະກຳຂອງຄະນະເລຂາທິການສະພາປະຊາຊົນແຂວງ ສະບັບເລກທີ 286/ຄລຂ, ລົງວັນທີ 28 ມິຖຸນາ 2024 ແລະ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການອະນຸມັດໃຫ້ດຳເນີນກອງປະຊຸມ ສະບັບເລກທີ313/ຄປຈຂ, ລົງວັນທີ 21 ມິຖຸນາ 2024.

ໃນລະຫວ່າງວັນທີ 8-10 ກໍລະກົດ 2024 ຄະນະທີມງານສະພາປະຊາຊົນແຂວງ ນຳໂດຍທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳສະພາປະຊາຊົນແຂວງຜົ້ງສາລີ ພ້ອມດ້ວຍວິທະຍາກອນ, ສຳມະນາກອນ ແລະ ກອງເລຂາຊ່ວຍວຽກໄດ້ດຳເນີນກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາທ່ານສະມາຊິກສະພາປະຊາຊົນແຂວງແລະພະນັກງານຊ່ວຍວຽກຂັ້ນເມືອງທີ່ເມືອງຍອດອູແຂວງຜົ້ງສາລີ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 46 ທ່ານ ຍິງ 18 ທ່ານ.

ກອງປະຊຸມອົບຮົມສ້າງຄວາມເຂັ້ມແຂງຄັ້ງນີ້ ໄດ້ຮັບຟັງການບັນຍາຍຂອງບັນດາທ່ານສຳມະນາກອນໃນຈຳນວນ 6 ຫົວຂໍ້ ເຊິ່ງມີ: ທ່ານ ທຸມເພັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຂຶ້ນສະເໜີຫົວຂໍ້: ການຮ່າງບົດປະກອບຄວາມເຫັນ, ການສ້າງຄຳຊັກຖາມ ແລະ ການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນຂັ້ນແຂວງ; ທ່ານ ນາງ ຈັນມະນີ ດວງພາສຸກ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຂຶ້ນສະເໜີຫົວຂໍ້: ການຄົ້ນຄວ້າ ແລະ ສ້າງຮ່າງມະຕິວ່າດ້ວຍການຮັບຮອງບົດລາຍງານການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ ແລະ ທ່ານ ສຸວັນ ຟູລາວລີ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂຶ້ນສະເໜີຫົວຂໍ້ຄື: 1). ການຄົ້ນຄວ້າແລະຮ່າງມະຕິຮັບຮອງບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ; 2). ການຄົ້ນຄວ້າ ແລະການສ້າງຮ່າງມະຕິຮັບຮອງບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງອົງການກວດສອບແຫ່ງລັດ ປະຈຳພາກເໜືອ 2; 3). ການຄົ້ນຄວ້າ ແລະ ສ້າງຮ່າງມະຕິວ່າດ້ວຍການຮັບຮອງບົດລາຍງານເຄື່ອນໄຫວວຽກງານປະຈຳປີ ແລະ ການກວດກາຕາມຜົນການກວດສອບຂອງອົງການກວດກາລັດແຂວງ; 4). ການຄົ້ນຄວ້າ ແລະ ສ້າງຮ່າງມະຕິວ່າດ້ວຍການຮັບຮອງການຈັດສັນງົບປະມານໂຄງການລົງທຶນຂອງລັດປະເພດ V ໃນແຕ່ລະປີ. ພາຍຫຼັງຮັບຟັງການບັນຍາຍຈາກບັນດາທ່ານວິທະຍາກອນແລ້ວ, ບັນດາທ່ານສຳມະນາກອນໄດ້ມີການປະກອບຄຳຄິດຄຳເຫັນເພື່ອເປັນການແລກປ່ຽນບົດຮຽນຕໍ່ກັບບັນດາເນື້ອໃນທີ່ໄດ້ນຳເຂົ້າເຝິກອົບຮົມໂດຍສົມທຽບພຶດຕິກຳຕົວຈິງໃນໄລຍະຜ່ານມາ ເພື່ອສ້າງຄວາມເປັນເອກະພາບກາຍເປັນບົດຮຽນທີ່ດີໃນການສືບຕໍ່ຈັດຕັ້ງປະຕິບັດໃຫ້ມີສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ, ນອກຈາກນັ້ນບັນດາທ່ານວິທະຍາກອນຍັງໄດ້ອະທິບາຍຊີ້ແຈງເພີ່ມເຕີມ ເພື່ອກະຈ່າງແຈ້ງຕໍ່ບັນດາບັນຫາທີ່ສຳມະນາກອນສົນໃຈ.

ໃນຕອນທ້າຍ ຍັງໄດ້ເຊື້ອເຊີນບັນດາທ່ານການນຳຂອງເມືອງແລະພະນັກງານຫຼັກແຫຼ່ງຂອງເມືອງຍອດອູເຂົ້າຮ່ວມກອງປະຊຸມເພື່ອຮັບຟັງການໂອ້ລົມຂອງທ່ານ ທອງສີ ເສົາສຸລິພົມ ເຊິ່ງທ່ານເນັ້ນໜັກບາງບັນຫາຕື່ມຄື: ຫຼັງຈາກຮັບການເຝິກອົບຮົມບັນດາເນື້ອໃນຕ່າງໆ ໃນຄັ້ງນີ້, ມອບໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳແຕ່ລະເມືອງຫັນເປັນວຽກງານຢ່າງລະອຽດ ແລະ ໃນການເຂົ້າຮ່ວມກອງປະຊຸມສະໄໝສາມັນຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງຕ້ອງມີການແບ່ງຄວາມຮັບຜິດຊອບໃຫ້ສະມາຊິກສະພາປະຊາຊົນແຂວງປະຈຳເມືອງຂອງຕົນໃນການປະກອບຄວາມເຫັນ; ໃຫ້ເອົາໃຈໃສ່ເຄື່ອນໄຫວປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ຮຽກຮ້ອງໃຫ້ ສສຂ ເປັນເຈົ້າການຄົ້ນຄວ້າ ແລະ ມີຄຳເຫັນປະກອບສ່ວນຊ່ວຍຢ່າງເລິກເຊິ່ງ ກ່ຽວກັບມະຕິຮັບຮອງແຕ່ລະວຽກງານ; ສະມາຊິກສະພາປະຊາຊົນແຂວງຄວນຄົ້ນຄວ້າຢ່າງຮອບຄອບກ່ຽວກັບການສະເໜີບັນຫາໃດໜຶ່ງທີ່ຈຳເປັນຕ້ອງຊັກຖາມກັບທີ່ໃນວາລະກອງປະຊຸມສະໄໝສາມັນແຕ່ລະຄັ້ງ ເຊິ່ງການກະກຽມເນື້ອໃນການຊັກຖາມສະມາຊິກສະພາປະຊາຊົນແຂວງຕ້ອງມີຂໍ້ມູນການຊັກຖາມ; ເພີ່ມທະວີຄວາມຮັບຜິດຊອບຂອງຕົນໃນການປະຕິບັດພາລະໜ້າທີ່ເປັນເສນາທິການຂອງຄະນະຫ້ອງວ່າການເມືອງ ແລະພະນັກງານຊ່ວຍວຽກໃນເວລາເຂົ້າຮ່ວມກອງປະຊຸມສະໄໝສາມັນແຕ່ລະຄັ້ງ; ພະນັກງານຊ່ວຍວຽກປະຈຳເມືອງຕ້ອງເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງໃນການເປັນເສນາທິການໃຫ້ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງ; ສະເໜີໃຫ້ອົງການປົກຄອງເມືອງ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງເອົາໃຈໃສ່ໃນການຍົກສູງປະສິດຕິພາບຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ; ເພື່ອຜັນຂະຫຍາຍທັດສະນະ ແລະ ທິດທາງຍົກສູງປະສິດຕິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍນັ້ນມອບໃຫ້ອົງການປົກຄອງເມືອງ, ສະມາຊິກສະພາປະຊາຊົນແຂວງຕ້ອງສຸມໃສ່ນຳພາ ແລະ ຄຸ້ມຄອງປະສິດທິພາບການຈັດຕັ້ງປະຕິບັດ; ສືບຕໍ່ນຳພາ-ຊີ້ນຳໃນການກໍ່ສ້າງພະນັກງານກັບທີ່, ການຫັນພະນັກງານລົງທ້ອງຖິ່ນຮາກຖານຕາມທິດ 3 ສ້າງ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະການພັດທະນາຊົນນະບົດຮອບດ້ານເພື່ອຊຸກຍູ້ໃນການຜະລິດສິນຄ້າ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ດຳເນີນເປັນປົກກະຕິ, ການປັບປຸງລະບົບການເມືອງຢູ່ຂັ້ນຮາກຖານຕາມ 4 ເນື້ອໃນ 4 ຄາດໝາຍ; ຄະນະພັກແລະອົງການປົກຄອງແຕ່ລະຂັ້ນເພີ່ມທະວີຄວາມເອົາໃຈໃສ່ໃນການປະສານງານ, ສ້າງສິ່ງອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບການປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງສະພາປະຊາຊົນແຂວງ; ຄະນະພັກ, ອົງການປົກຄອງແຕ່ລະຂັ້ນສືບຕໍ່ຍູ້ແຮງການຜະລິດຕາມທ່າແຮງຄວາມອາດສາມາດບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ.

**(ພຸດສະດີ ແສງຈອມຄູນ)**

# ຮອງປະທານ ສພຂ ບໍລິຄຳໄຊ ຊຸກຍູ້ວຽກງານຢູ່ 3 ເມືອງ



(ສພຊ) - ໃນວັນທີ 3-5 ກໍລະກົດ 2024 ທ່ານ ເລື່ອນ ວິໄລ ຈັນທະລາພັນ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດພາລະບົດບາດສິດ-ໜ້າທີ່ຂອງອົງການສືບສວນ-ສອບສວນ ການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ເມືອງບໍລິຄັນ, ເມືອງວຽງທອງ ແລະ ເມືອງຄຳເກີດ, ມີທ່ານ ເພັດສະໃໝ ໄຊຍະທິຈັກ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງຄຳເກີດ, ມີບັນດາເຈົ້າໜ້າທີ່ສືບສວນ-ສອບສວນແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງບັນດາອົງການສືບສວນ-ສອບສວນ ກໍຄື: ເຈົ້າໜ້າທີ່ຕຳຫຼວດ, ຫ້ອງການກະສິກຳ ແລະປ່າໄມ້, ຫ້ອງການສ່ວຍສາອາກອນ ແລະ ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງເມືອງ ໂດຍຫຍໍ້ກ່ຽວກັບວຽກງານການປະຕິບັດພາລະບົດບາດສິດ ແລະໜ້າທີ່ຂອງອົງການສືບສວນ-ສອບສວນ, ການປະຕິບັດກົດໝາຍໃນການດຳເນີນຄະດີ, ການນຳໃຊ້ 7 ມາດຕະການສະກັດກັ້ນແລະການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ ແນໃສ່ການເກັບກຳຂໍ້ມູນ, ບັນຫາທາງຂອງສຽງສັງຄົມ. ຈາກນັ້ນ, ບັນດາເຈົ້າໜ້າທີ່ຂັ້ນແຂວງ-ຂັ້ນເມືອງກໍໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປມາ ເພື່ອເຮັດໃຫ້ການປະຕິບັດໜ້າທີ່, ພາລະບົດບາດຂອງແຕ່ລະອົງການສືບສວນ-ສອບສວນໄດ້ຮັບໝາກຜົນ. ຕອນທ້າຍ ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ນຳຕື່ມ ກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຕໍ່ກັບ ຜົນສຳເລັດທີ່ແຕ່ລະອົງການຍາດມາໄດ້ໃນໄລຍະຜ່ານມາ ແລະ ເນັ້ນໜັກໃຫ້ແຕ່ລະພາກສ່ວນສືບຕໍ່ຊຸກຍູ້ ແລະປັບປຸງແກ້ໄຂບັນຫາທາງສຽງສັງຄົມ, ເອົາໃຈໃສ່ປະຕິບັດສິດ, ພາລະບົດບາດຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນຢ່າງເຂັ້ມງວດ, ສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ, ຕໍ່ຜູ້ທີ່ກະທຳຜິດໃຫ້ມີຄວາມເຂົ້າໃຈຢ່າງກ້ວາງຂວາງ, ເອກະພາບກັບການນຳໃຊ້ 7 ມາດຕະການ ໃນໝວດ 135, 136 ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຫັນປ່ຽນຢ່າງຮອບດ້ານ ແລະ ນັບມື້ນັບດີຂຶ້ນ.

ໃນໂອກາດເຄື່ອນໄຫວໃນຄັ້ງນີ້, ສະພາປະຊາຊົນແຂວງ ຕາງໜ້າໃຫ້ກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດມອບເງິນຈຳນວນ 100 ລ້ານກີບ ເພື່ອໄປຊ່ວຍປະຊາຊົນເມືອງຄຳເກີດທີ່ໄດ້ຮັບຜົນກະທົບຈາກລົມພາຍຸພັດເຂົ້າເມືອງ ຕາງໜ້າສະພາປະຊາຊົນແຂວງ ມອບໂດຍທ່ານ ເລື່ອນວິໄລ ຈັນທະລາພັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຮັບໂດຍທ່ານ ເພັດສະໃໝ ໄຊຍະທິຈັກກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງຄຳເກີດ.

**(ຂ່າວ: ໂສລະຢ້າ; ພາບ: ດາວເຮືອງ)**

# ສພຂ ຄຳມ່ວນ ຈັດກອງປະຊຸມຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ



(ສພຊ) - ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍເປັນວຽກງານໜຶ່ງທີ່ມີຄວາມໝາຍ, ຄວາມສຳຄັນທີ່ຈະຕ້ອງໄດ້ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດເພື່ອເປັນການຕິດຕາມກວດກາ, ຕີລາຄາ ແລະ ປະເມີນຄືນໃຫ້ມີປະສິດທິພາບ, ປະສິດທິຜົນ, ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ໃນລະຫວ່າງວັນທີ 10-11 ກໍລະກົດ 2024 ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນຂົງເຂດເສດຖະກິດຈຳນວນ 1 ສະບັບ, ທີ່ຫ້ອງປະຊຸມຣີສອດສາຍພູຫຼວງບ້ານຫຼັງຄັງ ເມືອງບົວລະພາແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ຮອງເລຂາພັກແຂວງປະທານສະພາປະຊາຊົນແຂວງຄຳມ່ວນ, ມີບັນດາທ່ານຮອງປະທານສະພາປະຊາຊົນຂັ້ນແຂວງ, ປະທານ/ຮອງປະທານຄະນະກຳມະການ, ເລຂາ/ຮອງເລຂາທິການສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ 10 ຕົວເມືອງ, ມີຕາງໜ້າພະແນກການ, ອົງການທຽບເທົ່າພະແນກການທີ່ກ່ຽວຂ້ອງຂອງແຂວງແລະພະນັກງານເສນາທິການຊ່ວຍວຽກຂອງສະພາປະຊາຊົນແຂວງຄຳມ່ວນເຂົ້າຮ່ວມທັງໝົດ 66 ທ່ານ, ຍິງ 15 ທ່ານ.

ໃນກອງປະຊຸມໄດ້ຮັບຟັງເນື້ອໃນລວມກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ; ເນື້ອໃນລະອຽດກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ; ຮ່າງແຜນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງແລະບົດລາຍງານຜົນການປະເມີນຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນສະບັບເລກທີ 333/ຈຂ.ຄມ, ລົງວັນ 3 ມີນາ 2020; ຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ພ້ອມກັນຄົ້ນຄວ້າແລະປະກອບຄຳຄິດຄຳເຫັນໃຫ້ມີເນື້ອໃນຄົບຖ້ວນ, ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມເປັນເອກະພາບໃຫ້ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດດຳເນີນຢ່າງເປັນລະບົບຕໍ່ເນື່ອງມີປະສິດທິພາບແລະປະສິດທິຜົນ.

ໂອກາດນີ້, ທ່ານ ບຸນມີ ພົມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະຮັບຜິດຊອບຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຂອງສະພາປະຊາຊົນຂັ້ນແຂວງທີ່ໄດ້ມີຄວາມເອົາໃຈໃສ່ໃນການປະຕິບັດໜ້າທີ່ເປັນຕົ້ນແມ່ນໄດ້ພະຍາຍາມປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງໄດ້ລົງຕິດຕາມກວດກາຢູ່ເມືອງຈຳນວນໜຶ່ງ ແລະ ປະສານສົມທົບກັບອົງການປົກຄອງຂັ້ນແຂວງ, ອົງການປົກຄອງຂັ້ນເມືອງແລະພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າປຶກສາຫາລືໂດຍສະເພາະກໍແມ່ນກອງປະຊຸມໃນຄັ້ງນີ້ເພື່ອເປັນການກວດກາຄວາມພ້ອມ, ການກະກຽມການຕິດຕາມການປະເມີນແລ້ວ ລາຍງານຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງແລະກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງຄຳມ່ວນຊຸດທີ II, ຕໍ່ກັບວຽກງານດັ່ງກ່າວນີ້ເປັນວຽກງານໜຶ່ງທີ່ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຊີ້ນຳ; ສຳລັບເນື້ອໃນສັງລວມຂອງບົດລາຍງານແມ່ນເຫັນດີເປັນເອກະພາບ ແຕ່ຢາກເນັ້ນຕື່ມບາງບັນຫາດັ່ງນີ້: ການປະເມີນຊຸດນີ້ຕ້ອງຕີລາຄາໃຫ້ໄດ້ວ່າການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍນີ້ສອດຄ່ອງແລ້ວບໍ່ຖືກຕ້ອງແລ້ວບໍ່ກັບສະພາບຄວາມເປັນຈິງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກໃນໄລຍະນີ້, ເປັນຕົ້ນແມ່ນສ້າງຄວາມຮັບຮູ້ຄວາມເຂົ້າໃນໃຈ, ການໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນຂັ້ນແຂວງໄດ້ພິຈາລະນາແລະຮັບຮອງເອົາ, ທາງເວບໄຊລັດຖະການ, ແຕ່ຂັ້ນແຂວງຮອດຂັ້ນພື້ນຖານບ້ານໃຫ້ທົ່ວເຖິງເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ເນື້ອໃນຂອງນິຕິກຳໃຕ້ກົດໝາຍແລະການປັບປຸງນິຕິກຳໃຕ້ກົດໝາຍດັ່ງກ່າວໃນຕໍ່ໜ້າປະກອບສ່ວນໃນການພັດທະນາດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

ກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກໂຄງການມູນນິທິເວສມິນສະເຕີເພື່ອປະຊາທິປະໄຕ (WFD).

**(ເອື້ອ ມະໂນສິງ)**

# ສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ-ສສຂ ແລະ ພະນັກງານຊ່ວຍວຽກ ສພຂ ໄຊສົມບູນ




(ສພຊ) ໃນລະຫວ່າງວັນທີ 4-5 ກໍລະກົດ 2024 ສະພາປະຊາຊົນແຂວງໄຊສົມບູນ ໄດ້ເປີດກອງປະຊຸມທີ່ຫ້ອງປະຊຸມຂອງຫ້ອງການສຶກສາທິການ ແລະ ກິລາເມືອງລ້ອງຊານ ພາຍໃຕ້ເປັນປະທານຂອງທ່ານ ຄຳພູທອນ ວົງພະຈັນ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງອະນຸວົງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມເປັນວິທະຍາກອນໂດຍທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ທ່ານ ສາຍອູ ພູມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ທ່ານ ໂພສີ ເຕັມເມລາດ ຫົວໜ້າກົມການເງິນ, ການທະນາຄານແລະກວດສອບ ແລະ ມີບັນດາທ່ານ ສສຂ ປະຈຳເຂດເລືອກຕັ້ງ 5 ເມືອງ ແລະ ພະນັກງານຜູ້ຊ່ວຍວຽກພາຍໃນສະພາປະຊາຊົນແຂວງໄຊສົມບູນຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທ່ານ ຄຳພູພອນ ວົງພະຈັນ ໄດ້ກ່າວຈຸດປະສົງ ແລະ ທ່ານໄດ້ໃຫ້ຮູ້ວ່າ: ການເປີດກອງປະຊຸມຝຶກອົບຮົມ ແລະການທີ່ເຊີນບັນດາວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມໃນຄັ້ງນີ້ ແມ່ນເພື່ອຍົກສູງກ່ຽວກັບການລົງໃຊ້ຊິດຕິດແທດກັບຜູ້ມີສິດເລືອກຕັ້ງ, ທັກສະໃນການຊັກຖາມ, ການເກັບກຳ ແລະ ວິໄຈຂໍ້ມູນຮັບໃຊ້ການເຄື່ອນໄຫວຢູ່ສະພາແຫ່ງຊາດ, ທັກສະການສົນທະນາ ແລະການຕອບບັນຫາກ່ຽວກັບການສົນທະນາຢູ່ກອງປະຊຸມສະພາແຫ່ງຊາດໃຫ້ແກ່ ສສຊ-ສສຂ ປະຈຳເຂດເລືອກຕັ້ງ ແລະ ພະນັກງານຂອງສະພາປະຊາຊົນແຂວງໄຊສົມບູນ ພ້ອມທັງເປັນການຍົກລະດັບຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ໜ້າທີ່ວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ສະມາຊິກສະພາປະຊາຊົນແຂວງ.

ໃນທີ່ປະຊຸມ, ວິທະຍາກອນໄດ້ຍົກໃຫ້ເຫັນກ່ຽວກັບການຊັກຖາມຢູ່ສະພາແຫ່ງຊາດ ສສ.ຫວຽດນາມ ບາງບົດຮຽນທີ່ຖອດຖອນໄດ້ຂອງສະມາຊິກສະພາແຫ່ງຊາດ ແລະ ເກັບກຳ, ການວິໄຈຂໍ້ມູນຮັບໃຊ້ການເຄື່ອນ

ອ່ານຕໍ່ໜ້າ 12




# ເສຍພາສີອາກອນ ແມ່ນຊ່ວຍຊາດພັດທະນາ

\# ດົ້ນກົບເມກ

ການເສຍພາສີ-ອາກອນ ແມ່ນພັນທະເປັນເງິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີລາຍໄດ້ ຫຼື ລາຍຮັບຈາກການດຳເນີນທຸລະກິດ, ການຊົມໃຊ້ສິນຄ້າ ຫຼື ການບໍລິການ ການນຳໃຊ້ທີ່ດິນ ແລະ ຊັບສິນ ຫຼື ການເຄື່ອນໄຫວອື່ນໆ ຢູ່ ສປປ ລາວ ແລະ ຕ່າງປະເທດ ເຊິ່ງຕ້ອງເສຍອາກອນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ຜູ້ຂຽນຂໍສະເໜີຕື່ມວ່າ: ວຽກງານພາສີແມ່ນພັນທະ ເປັນເງິນທີ່ມອບໃຫ້ລັດໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນການນຳເຂົ້າ-ສົ່ງອອກຜ່ານແດນ, ເຄື່ອນຍ້າຍສິນຄ້າ, ເຄື່ອງຂອງຜ່ານດ່ານຊາຍແດນ ຕາມອັດຕາທີ່ກຳນົດໄວ້ໃນອັດຕາພາສີ ແລະ ກົດໝາຍ.

ພວກເຮົາມັກໄດ້ຍິນທາງສຽງສັງຄົມເວົ້າກັນວ່າ ບາງຄົນຄ້າຂາຍກໍຫຼົບຫຼີກພາສີ-ອາກອນ ເພາະຈະໄດ້ກຳໄລຫຼາຍ ຍ້ອນບໍ່ເສຍພາສີເຊິ່ງການຄ້າປະເພດນັ້ນກໍພາໃຫ້ເກີດຄວາມບໍ່ຍຸຕິທຳ-ບໍ່ປະຕິບັດຕາມລະບຽບກົດໝາຍ ເວົ້າໃຫ້ສຸດ ຄົນຜູ້ນັ້ນເອົາປຽບໝູ່ ບໍ່ຮັກຊາດ ທັງໆທີ່ພັນທະ, ໜ້າທີ່ກໍບອກໄວ້ແລ້ວໃນເມື່ອເຮົາເປັນເຈົ້າຂອງປະເທດຊາດ ເປັນຫຍັງເຮົາຈຶ່ງບໍ່ຊ່ວຍກັນຍູ້ໜູນໃຫ້ຊາດຈະເລີນ ເພາະຄວາມຈິງຫຼາຍຄົນກໍຮັບຮູ້ວ່າ ລັດຖະບານ ກຳລັງເອົາໃຈໃສ່ເນັ້ນໜັກປະຕິບັດ 2 ວາລະແຫ່ງຊາດ ເວົ້າສະເພາະ ວາລະແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ດັ່ງນັ້ນ, ການເສຍພາສີ-ອາກອນຈາກການຄ້າຂາຍ ກໍແມ່ນວິທີໜຶ່ງສະແດງອອກເຖິງຄວາມຮັກຊາດ.

ປຶ້ມຄູ່ມືໂຄສະນາປຸກລະດົມເສຍພາສີ-ອາກອນໃຫ້ລັດ ຍັງໄດ້ສ້າງຄຳຖາມໜ້າຄິດໄວ້ວ່າ ຢາກໃຫ້ຊາດຕົນເອງພົ້ນທຸກ ຈະຕ້ອງເຮັດຫຍັງແດ່? ຄຳຕອບທີ່ຈະແຈ້ງບອກໄວ້ວ່າ: ປະຊາຊົນລາວຕ້ອງເຊີດຊູນ້ຳໃຈຮັກຊາດ, ຮັກເອກະລາດ, ເປັນເຈົ້າຕົນເອງພັດທະນາຊາດ, ປະຊາຊົນລາວຕ້ອງຍົກລະດັບຄວາມຮູ້, ຕື່ນຕົວທາງດ້ານການເມືອງ-ເສດຖະກິດ-ສັງຄົມ, ປະຊາຊົນລາວໃຊ້ສິດປະຊາທິປະໄຕຂອງຕົນເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດສັງຄົມ, ຮ່ວມອອກທຶນ, ປຶກສາ, ຮ່ວມຈັດຕັ້ງປະຕິບັດ, ຮ່ວມຕິດຕາມກວດກາ.

ສັງລວມໄດ້ວ່າ: ການເຊີດຊູນ້ຳໃຈຮັກຊາດ-ສະຕິຊາດ, ຮັກເອກະລາດ ແລະ ຮ່ວມກັນກວດກາ-ຄຸ້ມຄອງລັດ ແມ່ນໜ້າທີ່ລວມຂອງທຸກຄົນ, ການເສຍພາສີເສຍອາກອນ ກໍແມ່ນທາງໜຶ່ງຮັກຊາດ ຊ່ວຍກັນແກ້ໄຂບັນຫາເສດຖະກິດຂອງຊາດ !.







# ລິດຈະນາ- ລິຂິດ- ຈານ

ລິດຈະນາ, ລິຂິດ ແລະ ຈານ ເປັນສາມຄຳທີ່ມີຄວາມໝາຍກ່ຽວກັບ 'ຂຽນ' ຄືກັນ ແຕ່ມີຄວາມໝາຍ ແລະການນຳໃຊ້ຕ່າງກັນດັ່ງນີ້:

'ລິດຈະນາ' ເປັນຄຳກິລິຍາຈາກເຄົ້າປາລີ ຄຳເດີມອອກສຽງວ່າ ຣະຈະນາ ທີ່ໝາຍເຖິງ "ການແຕ່ງ, ການປະດັບ". ເມື່ອນຳມາໃຊ້ໃນພາສາລາວ ກໍແປງສຽງເປັນ 'ລິດຈະນາ' ຖ້າເປັນຄຳກິລິຍາ ກໍໝາຍເຖິງ "ຂຽນ, ແຕ່ງ, ປະພັນ" ເຊັ່ນ

- ໜັງສືເລື່ອງ "ສັງສິນໄຊ" ລິດຈະນາ ໂດຍ ປາງຄຳ.

ແຕ່ມາຮອດປັດຈຸບັນ ຄຳວ່າ ລິດຈະນາ ມັກໃຊ້ໃນຄວາມໝາຍວ່າ "ຖ່າຍທອດອອກຈາກໜັງສືເດີມ"

- ຄຳພີ ລາຊະສາດ: ກົດໝາຍບູຮານລາວ ລິດຈະນາໂດຍ ສຳລິດ ບົວສີສະຫວັດ.
- ມະຫາກາບ ທ້າວຮຸ່ງທ້າວເຈືອງ ສະບັບສົມບູນ, ລິດຈະນາໂດຍ ສີລາ ວີຣະວົງ.
- ໜັງສືຊຸມນຸມ ນານາຄະຕິ ສຸພາສິດບູຮານລາວລ້ານຊ້າງ: ລວມມີ ຄຳສອນຄະດີໂລກຄະດີທັມ ແລະ ແກ້ບັນຫາ ມີທັງມູນລະກົດບູຮານລາວ ຄາຖາອາຄົມ ມາດຕາບູຮານ ແລະ ອື່ນໆ ລິດຈະນາໂດຍ ນວນ ທີລະກຸນ

ຖ້າເປັນຄຳວິເສດ ກໍໝາຍເຖິງ "ງາມ" ແຕ່ນິຍົມໃຊ້ຄຳທີ່ແປງສຽງເປັນ 'ລິດຈະນາ' ຫຼາຍກວ່າ ຈະມັກຕັ້ງເປັນຊື່ຂອງແມ່ຍິງ ເຊັ່ນ ນາງລິດຈະນາ.

'ລິຂິດ' ມາຈາກເຄົ້າປາລີ ລິຂິຕະ ໝາຍເຖິງ "ຂຽນແລ້ວ" ແລ້ວແປງເປັນຄຳລາວວ່າ ລິຂິດ. ຖ້າເປັນຄຳນາມ ໝາຍເຖິງ "ໜັງສື, ຈົດໝາຍ" ເຊິ່ງມັກໃຊ້ກັບພະສົງສາມະເນນໃນສະໄໝບູຮານ ເຊັ່ນ

- ເຈົ້າອາວາດໄດ້ມີລິຂິດເຖິງພະສົງລູກວັດທີ່ໄປສຶກສາຢູ່ເມືອງອື່ນ.

ຖ້າເປັນຄຳກິລິຍາກໍໝາຍເຖິງ "ຂຽນ ຫຼື ກຳນົດ" ເຊັ່ນ

- ບາງຄົນເຊື່ອວ່າ ຊາຕາຄົນເຮົາທຸກຄົນໄດ້ຖືກລິຂິດໄວ້ແລ້ວ.
- ບາງຄົນເວົ້າວ່າ ຊີວິດຂອງເຮົາຈະເປັນແນວໃດ ກໍແລ້ວແຕ່ພົມລິຂິດ.
- ດວງເຮັງບໍ່ເຊື່ອເລື່ອງພົມລິຂິດ ດັ່ງນັ້ນ ລາວຈຶ່ງລິຂິດຊີວິດຂອງຕົນເອງ.

'ຈານ' ເປັນຄຳກິລິຍາ ມາຈາກເຄົ້າຂະແມ 'ຈາຣະ' ແລ້ວແປງເປັນຄຳລາວວ່າ ຈານ ໝາຍເຖິງ "ຂຽນໜັງສືໃສ່ໃບລານດ້ວຍເຫຼັກແຫຼມ" ເຊັ່ນ

- ເຫຼັກທີ່ຂຽນໜັງສືໃສ່ໃບລານ ເພິ່ນເອີ້ນວ່າ ເຫຼັກຈານ.
- ໃນສະໄໝບູຮານ ພະສົງມັກຈານໜັງສືທີ່ເປັນປົດວັນນະຄະດີຕ່າງໆໃສ່ເທິງໃບລານ.
- ທ້າວຄຳແດງມີໂອກາດໄດ້ຮຽນຈານໜັງສືໃສ່ໃບລານສະໄໝບວດເປັນຈົວຢູ່ວັດໃກ້ບ້ານ.



# ຂຽນຄຳລາວໃຫ້ຖືກ

\# ຄູແສງ

| ຖືກ | ຜິດ |
|---|---|
| ເຂົ້າລອງໜື່ນ | ເຂົ້າລອງມື່ນ |
| ມື່ນພະລາດ | ໜື່ນພະລາດ |
| ຫຍຶ່ງແຂ້ວ | ຍຶ່ງແຂ້ວ |
| ຍອດຍິ່ງ | ຍອດຫຍິ່ງ |
| ຫຍ່ອມຫຍ້າ | ຍ່ອມຫຍ້າ |
| ຍ່ອມດີ | ຫຍ່ອມດີ |
| ບ່າໄຫຼ່ | ບ່າໄລ່ |
| ໄລ່ໜີ | ໄຫຼ່ໜີ |
| ປ່າເຫຼົ່າ | ປ່າເລົ່າ |
| ເລົ່າເລື່ອງ | ເຫຼົ່າເລື່ອງ |




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ໃນບ່ອນທີ່ວຽກການບໍ່ແລ່ນສະດວກນັ້ນ ມັນມັກເປັນຍ້ອນບໍ່ມີກຸ່ມການນຳທີ່ປະສານງານໃກ້ຊິດກັບປະຊາຊົນ, ຍົກຕົວຢ່າງກໍຄື: ໂຮງຮຽນຫຼັງໜຶ່ງຖ້າບໍ່ມີນາຍຄູ, ຂ້າລາຊະການ ແລະ ນັກຮຽນກຸ່ມ ໜຶ່ງທີ່ຫ້າວຫັນແຕ່ 10 ຄົນໄປຫາຫຼາຍສິບຄົນມາສາມັກຄີກັນເປັນກຸ່ມແກ່ນສານນຳພາ ແລ້ວວຽກການໃນໂຮງຮຽນນັ້ນເດັດຂາດຕ້ອງເລະເຊີະ. ເພາະສະນັ້ນ ບໍ່ວ່າສຳນັກງານໃດ ບໍ່ວ່າກອງທະຫານໃດ ກໍຕ້ອງເລືອກເອົາຄົນຫ້າວຫັນບໍລິສຸດ ມີຄວາມສາມາດຮັກສາລະບຽບວິໄນສາມັກຄີກັນເຂົ້າເປັນແກ່ນສານການນຳພາ.

ການນຳພາໃນວຽກງານຕົວຈິງຂອງພັກ ຕ້ອງແມ່ນອອກມາຈາກໝູ່ປະຊາຊົນແລ້ວກັບຄືນໄປຫາໝູ່ປະຊາຊົນ, ໝາຍຄວາມວ່າ ລວບລວມເອົາທຸກຄຳເຫັນທີ່ຊະຊາຍ, ປົກຍ່ອຍຂອງປະຊາຊົນມາຈຳແນກມັນ, ຄົ້ນຄວ້າມັນ, ສັບຊ້ອນມັນໃຫ້ເປັນຄຳເຫັນທີ່ມີສາຍໄຍຕິດຕໍ່ກັນ, ແລ້ວເອົາມັນໄປອະທິບາຍຊີ້ແຈງໃຫ້ປະຊາຊົນ ແລະ ເຮັດໃຫ້ປະຊາຊົນຍຶດໝັ້ນ ແລະ ປະຕິບັດຄຳເຫັນອັນນັ້ນ.

ອ່ານຕໍ່ສະບັບໜ້າ...



ສຸກສະບາຍທາຍໂລດ

# ຜັກແປ້ງນົວ ຜັກພື້ນບ້ານ ກັບຄຸນປະໂຫຍດທີ່ຫຼາກຫຼາຍ

ໂດຍ: ທິວກະທິ



ຜັກແປ້ງນົວນິຍົມນຳມາປຸງແຕ່ງເປັນອາຫານ ໂດຍເກັບຍອດອ່ອນແລະໃບອ່ອນ ສ່ວນຫຼາຍມັກປະສົມກັບອາຫານປະເພດຕ່າງໆເຊັ່ນ: ຂົ້ວ, ເອາະ, ແກງ ແລະ ອື່ນໆ ເຊິ່ງລົດຊາດຂອງມັນຈະຄ້າຍກັບຜັກກາດນາ ແຕ່ແຊບກວ່າ. ນອກຈາກເປັນອາຫານທີ່ມີລົດຊາດແຊບແລ້ວ ຍັງມີຄຸນປະໂຫຍດທາງດ້ານການຢາ ເຊັ່ນ: ໃຊ້ເປັນຢາລະບາຍ, ຂັບປັດສະວະ, ເພີ່ມການໄຫຼວຽນຂອງເລືອດ, ຊ່ວຍຍ່ອຍອາຫານ, ຊ່ວຍບຳລຸງສາຍຕາ, ຊ່ວຍຫຼຸດນ້ຳໜັກ, ລ້າງສານພິດຈາກໝາກໄຂ່ຫຼັງ, ປ້ອງກັນການເຈັບຫົວ, ເພີ່ມແຄລຊຽມໃຫ້ກະດູກ, ຊ່ວຍຂ້າເຊື້ອໃນປອດ, ປ້ອງກັນເລືອດຈາງ, ເພີ່ມທາດເຫຼັກໃນເລືອດ, ຊ່ວຍຄວບຄຸມນ້ຳຕານກັບຜູ້ເປັນພະຍາດເບົາຫວານ, ຊ່ວຍບຳລຸງສະໝອງໃຫ້ເຮັດວຽກຢ່າງມີປະສິດທິພາບ. ຄຸນຄ່າທາງໂພຊະນາການທາງອາຫານສູງ, ໃບຜັກແປ້ງນົວ 100 ກຣາມ ຈະປະກອບດ້ວຍນ້ຳ85.3%, ຄາໂບໄຮເດຣດ 4.2%, ໂປຣຕີນ 5.7%, ໄຂມັນ 0.4%, ໃຍອາຫານ 1.9%, ມີແຮ່ທາດຕ່າງໆເຊັ່ນ: ແຄລຊຽມ 199.4 ມິນລີກຣາມ, ໂພແທສຊຽມ 217.2 ມິນລີກຣາມ, ຟອສຟໍຣັດ39.0 ມິນລີກຣາມ, ເຫຼັກ 11.4 ມິນລີກຣາມ, ມີວິຕາມິນຊີ164.7 ມິນລີກຣາມ, ແລະວິຕາມິນເອ 0.085 ມິນລີກຣາມ. ນອກຈາກນີ້, ຍັງມີການລາຍງານວ່າເປັນຜັກທີ່ມີຄຸນຄ່າທາງອາຫານສູງກວ່າຜັກອື່ນໆ 2-3 ເທົ່າ.

**ຂໍ້ຄວນລະວັງ:** ຜັກແປ້ງນົວ ມີຄຸນຄ່າທາງໂພຊະນາການສູງ ແຕ່ຄວນປຸງແຕ່ງໃຫ້ສຸກ ເພາະຜັກດິບມີທາດພິດກຸ່ມໄຮໂດຣໄຊຍານິກ ໄກລໂຄໄຊດ໌ (hydrocyanic glycosides) ເຊິ່ງເປັນທາດອັນຕະລາຍຕໍ່ຮ່າງກາຍ. ດັ່ງນັ້ນ, ຄວນຕົ້ມໃຫ້ສຸກຢ່າງໜ້ອຍຜ່ານຄວາມຮ້ອນ 15-20 ນາທີແລະຫ້າມກິນຜັກດິບ.

**ຂໍ້ມູນຈາກ: ພາເຂົ້າລາວ**




## ຍິງລາວສາວເດັ່ນ

**# ລູກທາດສາມປາງ**

❈ ຍິງລາວດັ່ງເດັ່ນກ້າ
ຊື່ສຽງຂະໂຍງໄກ
ຜິວຜ່ອງພັນເໝືອນແຕ້ມ
ຍາມເມື່ອແລລ່ຳຈ້ອງ

ລືຊ່າຊານໄຊ
ເກັ່ງງາມຄົນຍ້ອງ
ແນມນຳເກີນຄ່ອງ
ເຫັນນ້ອງຄ່ຽມຄົມ

❈ ມວຍຜົມດຳແຕ່ງເກົ້າ
ເດັ່ນລະໄມແພວພາວ
ສຸດສະເໜຫາຮູ້
ວາຈານວນອື່ນອ້ອຍ

ສະໄບບ່ຽງແພໄໝ
ນຸ່ງງາມຊິ່ງເອ້
ຍິງລາວດູສະຫງ່າ
ຫວານຈ້ອຍມ່ວນຫູ

❈ ຄວາມຮູ້ສູງສິ່ງພົ້ນ
ເປັນນາຍພັນຫຼາຍຄົນ
ວິຊາການເຕັມຂັ້ນ
ແຂງຊ່ວງຊາຍເລັ່ງດົ້ນ

ທຽມບ່າວຊາຍສະກັນ
ດັ່ງດຽວສະເໝີໜ້າ
ແວວໄວຂັນແຂ່ງ
ທັນທ້າວດຸ່ງກາຍ

❈ ວຽກຈັບບາຍກໍ່ສ້າງ
ເປັນການນຳພາພັກ
ຄຽງຂ້າງຊາຍດອມເຂົ້າ
ຍິງຂືນຂວາຍກິ່ນໄງ້

ຫຼາຍຢ່າງຍິງທຳ
ມາກມາຍຍິງພ້ອມ
ໜັກເບົາຊວ້ານຊ່ວຍ
ໃຈກ້າເກັ່ງຫານ

❈ ວຽກເຮືອນຊານຄ່ອງແຄ້ວ
ບໍ່ຂອດຄາເຄືອງຂືນ
ເວົ້າມ່ວນງາມຮອຍຍິ້ມ
ເຫັນແລ້ວຍໍຍິ່ງແທ້

ເຮັດຢູ່ກະທຳກິນ
ຊູອັນເຖິງເທົ້າ
ຄົ້ນມາຢາມແວ່
ແຍງຍ້ອງວ່າດີ...ແທ້ແລ້ວ!

❈ ສະຕີລາວເອກອ້າງ
ຮຸ່ງປັນຍາຄົມແຫຼມ
ການສຶກສາໂທຂັ້ນ
ມີພົບໄຫວກັ່ນກ້າວ

ຍຸກໃໝ່ຮຽນສູງ
ເກັ່ງງາມແກມກ້າ
ປະລິນຍາເອກໃຫຍ່
ກຽນກ້ອງວ່ອງໄວ

❈ ຖືວິໄນເຄັ່ງຂໍ້
ງານສຳຄັນຍິງລຸຍ
ຮີດຄອງລາວແຂນຫ້ອຍ
ສືບທຳເປັນທີ່ຈັ້ງ

ວຽກດ່ວນທັນການ
ຕໍ່ເຕີມຕາມຕ້ອຍ
ປະເພນີດູເດັ່ນ
ວາງໄວ້ຫວ່າງໃຈ...ງາມເດ!






## ໜັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສ້ຽມທ້ຽນ**

❈ **ຊົມ**ເຊີຍວັນສ້າງຕັ້ງ**ສະຫະພັນແມ່ຍິງ**ລາວ ທີ່ຈະໝູນວຽນມາບັນຈົບຄົບຮອບ **69 ປີ (20 ກໍລະກົດ 1955-20 ກໍລະກົດ 2024)** ແມ່ຍິງລາວເອກອ້າງ ຜົນງານໃຫຍ່ມີມາ ປົກປັກຮັກສາ ເພີ່ມພູນຄູນສ້າງ ວາງຮາກຖານແນວທາງໃຫ້ ວັດທະນະທຳສືບເນື່ອງ ຊື່ສຽງດັງກຶກກ້ອງ ໂລກາຍ້ອງຊື່ນຊົມ **ນັບແລ້ວ!**

❈ **ວັນ**ທີ 15 **ກໍລະກົດ**ຜ່ານມາ ໃນກອງປະຊຸມເປີດກ້ວາງລັດຖະບານ **ປະທານປະເທດ**ໄດ້ມີຄຳເຫັນ**ເດັດຂາດ**ໃຫ້ລັດຖະບານ ເອົາໃຈໃສ່ແກ້ ບັນຫາເດັ່ນສັງຄົມ ລະດົມທຸກກຳລັງ ປ່ຽນແປງໃຫ້ມັນໄດ້ ໃນໄລຍະ 1 ເດືອນໃຫ້ ເງິນກີບແຂງຄ່າ ອັດຕາລັດຖະກອນເພີ່ມຂຶ້ນ ສິນຄ້າທ່ຽງສະຖຽນ **ນັບແລ້ວ!**

## ຊອບຍິ້ມ

*# ແອ່ບຕຸ້ງ*

### ເລື່ອງ: ຂີ້ແຕກ

ທີ່ຕະຫຼາດແຫ່ງໜຶ່ງ ຢູ່ຮ້ານຂາຍເຄື່ອງປະດັບ ຕູ້ຂຽວກຳລັງຢືນຊອກຊື້ແຫວນຄຳຝັງເພັດຢູ່ ທັນໄດ້ນັ້ນຕູ້ກໍຫຼຽວໄປເຫັນແຫວນວົງໜຶ່ງທີ່ງາມໆ ຈຶ່ງຮີບກົ້ມລົງເບິ່ງຈົນລືມວ່າກຳລັງປວດຕົດຢູ່ ຈົນຕົດອອກມາ ແປັດ...! ຕູ້ຂຽວອາຍຈຶ່ງຫຼຽວຊ້າຍຫຼຽວຂວາ ແຕ່ບໍ່ມີໃຜຢ່າງກາຍມາບໍລິເວນນັ້ນ ມີພຽງເຈົ້າຂອງຮ້ານຢືນຍິ້ມຢູ່ຕໍ່ໜ້າ ດ້ວຍຄວາມອາຍ ລາວຈຶ່ງຖາມໄປວ່າ:

"ແຫວນວົງນີ້ລາຄາເທົ່າໃດ"

ເຈົ້າຂອງຮ້ານຕອບວ່າ:

"ເຈົ້າເຫັນພຽງຄວາມງາມເຈົ້າຍັງຕົດແຕກ ຄັນຮູ້ລາຄາເຈົ້າຊິບໍ່ຂີ້ແຕກ ພຸ້ນບໍ່!!!"




## ຄະຕິເຕືອນໃຈ

*#ດອກຫຍ້າ*

ອັດສະຈັນໃຈໂອ້ ໂອເງິນສັງມາແຕກ
ບາດວ່າກະໂປະໝາກພ້າວ ສັງມາໝັ້ນກວ່າໃຈ



## ສະມາຄົມ...

(ຕໍ່ຈາກໜ້າ 1)

ການຕ່າງໆ ນັບແຕ່ສູນກາງຮອດທ້ອງຖິ່ນ ໄດ້ຮັບການພັດທະນາຢ່າງມີປະສິດທິພາບ-ປະສິດທິຜົນ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສອງຊາດ, ສະແດງໃຫ້ເຫັນສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ, ໝັ້ນຄົງຍາວນານລະຫວ່າງສອງປະເທດ ກໍຄືປະຊາຊົນສອງຊາດ ໄດ້ຮັບການເສີມຂະຫຍາຍເຂົ້າສູ່ທາງກວ້າງແລະລວງເລິກ, ນັບມື້ເກີດດອກອອກຜົນ ທັງເປັນການປະກອບສ່ວນອັນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນໄລຍະໃໝ່ຂອງ ສອງປະເທດ ກໍຄືການປະກອບສ່ວນເຂົ້າໃນພາລະກິດສັນຕິພາບ, ສະຖຽນລະພາບ, ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ.

ສຳລັບການພົວພັນຮ່ວມມືລະຫວ່າງສອງສະມາຄົມມິດຕະພາບ ລາວ-ກຳປູເຈຍ, ກຳປູເຈຍ-ລາວ ເຫັນວ່າມີບາດກ້າວຂະຫຍາຍຕົວ ແລະ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ມີການປະສານສົມທົບ, ພົວພັນຮ່ວມມືນຳກັນຢ່າງປົກກະຕິ ແລະຕໍ່ເນື່ອງຕະຫຼອດມາ; ໄດ້ສືບຕໍ່ກົນໄກການແລກປ່ຽນຢ້ຽມຢາມ, ການໄປມາຫາສູ່ກັນເປັນປົກກະຕິ; ມີການແລກປ່ຽນຂໍ້ມູນຂ່າວສານ, ຊຸກຍູ້, ສົ່ງເສີມ, ສະໜັບສະໜູນການພົວພັນຮ່ວມມືແລະໄປມາຫາສູ່ກັນລະຫວ່າງປະຊາຊົນຕາມເຂດຊາຍແດນ; ສະໜັບສະໜູນການຮ່ວມມືດ້ານວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບ ຮຽບຮ້ອຍຕາມຊາຍແດນ, ດ້ານເສດຖະກິດ-ການຄ້າ, ການລົງທຶນ, ການທ່ອງທ່ຽວ, ສຶກສາ-ສາທາລະນະສຸກ ແລະ ອື່ນໆ ຕາມເງື່ອນໄຂແລະຄວາມສາມາດຕົວຈິງເພື່ອຜົນປະໂຫຍດຂອງປະເທດແລະປະຊາຊົນສອງຊາດ.

ສຳລັບແຜນໃນຕໍ່ໜ້າ, ສອງຝ່າຍໄດ້ປຶກສາຫາລື ແລະເອກະພາບນຳກັນ ເປັນຕົ້ນ:

1) ສືບຕໍ່ກົນໄກການປະສານງານ, ແລກປ່ຽນຂໍ້ມູນຂ່າວສານ ແລະແລກປ່ຽນການຢ້ຽມຢາມ, ໄປມາຫາສູ່ກັນໃຫ້ເປັນປົກກະຕິ ລະຫວ່າງສອງສະມາຄົມມິດຕະພາບລາວ-ກຳປູເຈຍ, ກຳປູເຈຍ-ລາວ;

2) ຊຸກຍູ້ບັນດາສະມາຄົມຂັ້ນແຂວງ, ປະຊາຊົນຕາມເຂດຊາຍແດນ ໃຫ້ໄປມາຫາສູ່, ສ້າງກິດຈະກຳຮ່ວມກັນ ເຊັ່ນ: ການແລກປ່ຽນສິລະປະ, ວັດທະນະທຳ, ກິລາມິດຕະພາບ, ການທ່ອງທ່ຽວ ແລະ ອື່ນໆ;

3) ປະສານງານ, ຊຸກຍູ້ ແລະ ເປັນຂົວຕໍ່ສ້າງກິດຈະກຳໃຫ້ແກ່ຂະບວນການຊາວໜຸ່ມ, ນັກສຶກສາ ໃນການທັດສະນະສຶກສາ ເພື່ອຄົ້ນຄວ້າ, ສຶກສາກ່ຽວກັບສາຍພົວພັນມິດຕະພາບຂອງສອງຊາດ ເພື່ອເປັນການປູກຈິດສຳນຶກໃຫ້ຄົນຮຸ່ນໃໝ່ໄດ້ເຂົ້າໃຈແຈ້ງ, ເລິກເຊິ່ງ ແລະເປັນເຈົ້າການສືບທອດມູນເຊື້ອອັນດີງາມຂອງສອງຊາດ ລາວ ແລະ ກຳປູເຈຍ;

4) ຊຸກຍູ້ ແລະ ເປັນຂົວຕໍ່ ໃນການພົວພັນຮ່ວມມືໃຫ້ແກ່ຂະແໜງການຄ້າ, ການລົງທຶນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະແມ່ນບັນດານັກທຸລະກິດ ລາວ ແລະ ກຳປູເຈຍ ໃຫ້ມີການພົວພັນ ແລະຮ່ວມມືນຳກັນ.

ນອກຈາກການພົບປະສອງຝ່າຍ, ຄະນະຜູ້ແທນສະມາຄົມມິດຕະພາບລາວ-ກຳປູເຈຍ ຍັງໄດ້ເຂົ້າພົບປະທ່ານຮອງປະທານແນວໂຮມມາຕຸພູມແຫ່ງລາຊະອານາຈັກກຳປູເຈຍ, ພົບປະກັບເຈົ້າ ແຂວງພຣະສີຫະນຸ, ຢ້ຽມຊົມຫໍພິພິທະພັນແຫ່ງຊາດ ແລະ ອະນຸສາວະລີແຫ່ງຊາດ ເຕໂຈ ຮຸນເຊນ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມລາຍງານສະພາບການ ເຄື່ອນໄຫວຂອງສະພາປະຊາຊົນແຂວງ, ນັບທັງສະພາບການລົງທຶນກໍ່ສ້າງຫ້ອງການສະພາຂອງແຂວງ ໂດຍມີບັນດາທ່ານປະທານແລະຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ, ບັນດາພະແນກການ, ອົງການ ແລະ ຜູ້ປະກອບການທີ່ກ່ຽວຂ້ອງຂອງ 2 ແຂວງດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຂອງສະພາແຫ່ງຊາດ ໃຫ້ດຳເນີນໄປຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ໂດຍສະເພາະຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການກໍ່ສ້າງຕຶກສະພາປະຊາຊົນແຂວງຢູ່ແຂວງຫຼວງນ້ຳທາ ແລະ ຜົ້ງສາລີ ແນໃສ່ຮັບປະກັນມາດຕະຖານດ້ານເຕັກນິກ ແລະການຄຸ້ມຄອງຮ່ວມກັນລະຫວ່າງສູນກາງກັບທ້ອງຖິ່ນ ທັງເປັນການເກັບກຳຂໍ້ມູນຕົວຈິງກ່ຽວກັບຂໍ້ສະດວກ ແລະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວ; ນອກນັ້ນ, ຄະນະຍັງໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງປີ 2021) ແນໃສ່ຮັບປະກັນເຮັດໃຫ້ການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງເຂັ້ມງວດ, ຄົບຖ້ວນ, ຖືກຕ້ອງຕາມກົດໝາຍແລະຄວາມເປັນຈິງ. ຄະນະຍັງໄດ້ຕິດຕາມຄວາມຄືບໜ້າຂອງໂຄງການພັດທະນາຈຳນວນໜຶ່ງຂອງລັດຖະບານທີ່ພວມຈັດຕັ້ງປະຕິບັດຢູ່ພາຍໃນແຂວງເປົ້າໝາຍທີ່ເຫັນວ່າຍັງມີສິ່ງທ້າທາຍຫຼາຍຢ່າງໃນການລົງທຶນຂອງຕ່າງປະເທດຢູ່ເຂດດັ່ງກ່າວ.

ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ໄປຢ້ຽມຢາມໂຮງງານປຸງແຕ່ງຢາສູບ ຢູ່ແຂວງຜົ້ງສາລີ, ໂຮງງານປຸງແຕ່ງຢາງພາລາ ຢູ່ແຂວງຫຼວງນ້ຳທາ ແລະ ພື້ນຖານການຜະລິດຈຳ ນວນໜຶ່ງໃນ 2 ແຂວງດັ່ງກ່າວ.

**(ນາງ ກຸກກິກ ບຸດດາໄຊ)**

## ປະເມີນ...

(ຕໍ່ຈາກໜ້າ 1)

ລັດຖະທຳມະນູນ (ຄລຊ) ທັງເປັນຫົວໜ້າກອງເລຂາຂອງ ຄລຊ; ມີບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ, ກອງເລຂາ ແລະອະນຸກຳມະ ການຕ່າງໆຂອງ ຄລຊພ້ອມດ້ວຍບັນດາການນຳຂັ້ນສູງ ແລະ ພະນັກງານຫຼັກແຫຼ່ງຈາກກະຊວງ, ອົງການທີ່ກ່ຽວ ຂ້ອງກັບສອງຂົງເຂດ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນວ່າ: ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະເກືອບ 10 ປີທີ່ຜ່ານມາ ໂດຍສະເພາະຢູ່ຂົງເຂດການປົກຄອງ ແລະ ຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາຕັ້ງຂຶ້ນ ເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນສະບັບປີ 2015 ໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດປາກົດຜົນເປັນຈິງໄດ້. ທ່ານຍັງໄດ້ຮຽກຮ້ອງບັນດາທ່ານຜູ້ເຂົ້າຮ່ວມຈົ່ງເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາ ແລະ ກ້າຍົກບັນຫາ ເພື່ອເຮັດໃຫ້ກອງປະຊຸມມີຜົນສຳເລັດຕາມຈຸດປະສົງຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ຮັບຟັງການສະເໜີບົດສະຫຼຸບປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ2015ຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແລະ ການປະກອບຄຳເຫັນ ລວມທັງຂໍ້ສະເໜີຂອງບັນດາທ່ານຈາກພາກສ່ວນສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ.

**(ອານຸສອນ ພູມມີທອນ ແລະ ສອນສັກ ວັນວິໄຊ)**

## ທ່ານ ສົມມາດ ...

(ຕໍ່ຈາກໜ້າ 1)

(ສພຊ) - ພິທີພົບປະສອງຝ່າຍລະຫວ່າງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ກັບ ທ່ານ ຢາມາກຸຊິ ນາຊຸໂອະ ຫົວໜ້າພັກໂຄເມອິໂຕະ(Komeito), ສະມາຊິກສະພາສູງ ແຫ່ງປະເທດຍີ່ປຸ່ນ ພ້ອມດ້ວຍຄະນະທັງສອງຝ່າຍ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 12 ກໍລະກົດ 2024 ທີ່ຫໍສະພາແຫ່ງຊາດ.

ໃນການພົບປະ, ທ່ານ ສົມມາດ ພົລເສນາ ໄດ້ສະແດງຄວາມຍິນດີຕ້ອນ ແລະ ຕີລາຄາສູງຕໍ່ຜົນຂອງການພົບປະເຮັດວຽກລະຫວ່າງທ່ານ ຢາມາກຸຊິ ນາຊຸໂອະ ພ້ອມດ້ວຍຄະນະ ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງ ສປປ ລາວ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະການຮ່ວມມືລະຫວ່າງສອງປະເທດ ລາວ ແລະ ຍີ່ປຸ່ນ ໃຫ້ດີຂຶ້ນກວ່າເກົ່າ ພ້ອມທັງຝາກຄວາມຢື້ຢາມຖາມຂ່າວຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດເຖິງທ່ານ ຮິໂຣຢູກິ ໂຮໂຊດະ (Hosoda Hiroyuki) ປະທານສະພາຜູ້ແທນລາດສະດອນ (ສະພາຕ່ຳ) ແລະ ທ່ານ ຮິເດຮິສະ ໂອສືຈິ (Hidehisa OTSUJI) ປະທານສະພາສູງ ແຫ່ງປະເທດຍີ່ປຸ່ນ. ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ເຫັນວ່າຕະຫຼອດໄລຍະຜ່ານມາສາຍພົວພັນມິດຕະພາບ ແລະການຮ່ວມມືແບບຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດລາວ-ຍີ່ປຸ່ນກໍຄືລະຫວ່າງສອງອົງການນິຕິບັນຍັດ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ເຂົ້າສູ່ລວງເລິກຍິ່ງໆຂຶ້ນ; ນັບແຕ່ໄດ້ມີການຍົກລະດັບການພົວພັນຮ່ວມມືຈາກຄູ່ຮ່ວມມືຮອບດ້ານເປັນຄູ່ຮ່ວມຍຸດທະສາດໃນປີ2015 ເປັນຕົ້ນມາ, ສອງປະເທດໄດ້ມີການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ນັບແຕ່ສູນກາງລົງຮອດທ້ອງຖິ່ນນຳກັນຢ່າງປົກກະຕິ. ການພົວພັນລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ແມ່ນມີການຮ່ວມມືອັນດີນຳກັນເປັນຢ່າງດີແລະໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເຊິ່ງສະແດງອອກໃນການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ແລະ ຂັ້ນຕ່າງໆເປັນປົກກະຕິ; ສອງອົງການນິຕິບັນຍັດແລກປ່ຽນສານຊົມເຊີຍ, ສານອວຍ ພອນໃນໂອກາດວັນສຳຄັນຕ່າງໆ, ມີການພົວພັນຮ່ວມມືນຳກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສຳລັບການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ, ຮອງປະທານສະພາແຫ່ງຊາດສະເໜີທິດທາງຕໍ່ໜ້າດັ່ງນີ້: 1) ສືບຕໍ່ການແລກປ່ຽນຄະນະຜູ້ແທນຂັ້ນສູງ, ກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ ແລະ ວິຊາການ ຕິດພັນກັບການແລກປ່ຽນຂໍ້ມູນ ແລະບົດຮຽນປະສົບການການປະຕິບັດພາລະບົດບາດດ້ານນິຕິບັນຍັດ; 2) ຊຸກຍູ້ການແລກປ່ຽນ, ການໄປມາຫາສູ່ກັນ ລະຫວ່າງສະພາປະຊາຊົນຂັ້ນແຂວງຂອງ ສປປ ລາວ ແລະ ສະພາຂັ້ນທ້ອງຖິ່ນຂອງຍີ່ປຸ່ນ; 3) ຊຸກຍູ້ໃຫ້ເກີດຜົນສຳເລັດໃນການລົງນາມບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາຍີ່ປຸ່ນ ເຊິ່ງສະພາແຫ່ງຊາດລາວ ກໍໄດ້ສົ່ງບົດບັນທຶກດັ່ງກ່າວໃຫ້ລັດຖະສະພາຍີ່ປຸ່ນພິຈາລະນາແລ້ວ; 4) ສືບຕໍ່ຊຸກຍູ້ການພົວພັນຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ໂດຍສະເພາະໃນທ້າຍປີນີ້ ສປປລາວ ຈະເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 17-23 ຕຸລາ 2024.

ທ່ານ ຢາມາກຸຊິ ນາຊຸໂອະ ກໍໄດ້ກ່າວສະແດງຄວາມຂອບໃຈຢ່າງຍິ່ງຕໍ່ທ່ານ ສົມມາດ ພົລເສນາທີ່ຕ້ອນຮັບຢ່າງອົບອຸ່ນ, ແຈ້ງໃຫ້ຊາບໂດຍຫຍໍ້ຜົນຂອງການພົບປະເຮັດວຽກກັບພາກສ່ວນຕ່າງໆຂອງ ສປປ ລາວ; ພ້ອມທັງຈະນຳເອົາຂໍ້ສະເໜີຕ່າງໆຂອງສະພາແຫ່ງຊາດລາວ ໄປສະເໜີຕໍ່ສະພາຕ່ຳ ແລະ ສະພາສູງຂອງຍີ່ປຸ່ນ ເພື່ອຊຸກຍູ້ພາກສ່ວນກ່ຽວຂ້ອງປະຕິບັດໃຫ້ເກີດດອກອອກຜົນ.

**(ສອນສັກ ວັນວິໄຊ)**

ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຢ່າໃຫ້ນ້ຳຂາດປາ ຢ່າໃຫ້ປ່າຂາດສັດ

ເລື່ອງທີ່ເລາະຊອກມາຂຽນໃຫ້ອ່ານປະຈຳສະບັບນີ້ລ້ວນແຕ່ພົວພັນກັບການອະນຸຮັກສັດ ບໍ່ວ່າຈະເປັນສັດໂຄກ ຫຼື ສັດນ້ຳ. ຂໍເລີ່ມຈາກເລື່ອງທີ່ເກີດຂຶ້ນຢູ່ອິນໂດເນເຊຍ ທີ່ເປັນປະເທດເສດຖີເກາະດອນຫຼາຍກວ່າ 10 ພັນແຫ່ງ ທີ່ຢັ່ງຢາຍຢູ່ນ່ານນ້ຳທະເລອັນກວ້າງໃຫຍ່ໄພສານ ໃນນັ້ນ ຍັງມີຫຼາຍໆເກາະທີ່ເປັນເຂດຜີບໍ່ທ່ອງຄົນບໍ່ທຽວ, ເປັນເຮືອນຢູ່ອູ່ນອນຂອງສັດນາໆພັນກໍຄືເຜົ່າພັນມະນຸດດຶກດຳບັນຫ່າງໄກຍຸກດິຈິຕອນ. ສ່ວນທີ່ພົວພັນກັບປະຊາກອນສັດນັ້ນ, ອິນໂດເນເຊຍ ຍັງມີຊະນິດສັດເລືອຄານທີ່ເປັນເອກະລັກສະເພາະເອີ້ນວ່າ ມັງກອນໂກໂມໂດ ຄ້າຍເຫ້ຍ ຫຼື ແຂ້ໃຫຍ່, ມີລິງໂອຣັງອູຕັງ, ພັນນົກຮ້ອງສຽງຫວານ, ເສືອ, ແຮດ, ລີງ ແລະ ນົກ ຊະນິດທີ່ກ່າວມານັ້ນເປັນທີ່ນິຍົມຊື້ຂາຍກັນໃນທົ່ວໂລກ ເພື່ອເອົາໄປເປັນສັດລ້ຽງປະດັບບາລະມີຂອງສ່ວນບຸກຄົນຢູ່ໃນຫຼາຍໆປະເທດ; ດັ່ງນັ້ນ, ຈຶ່ງບໍ່ແປກທີ່ມີຂ່າວອອກມາເລື້ອຍໆກ່ຽວກັບການຢຶດສັດປ່າທີ່ຖືກລັກລອບຂ້າມປະເທດ ໄປຂາຍຢູ່ຕາມຕະຫຼາດມືດໃນຫຼາຍໆປະເທດ. ຍ້ອນແນວນີ້ລະ, ທາງການອິນໂດເນເຊຍ ຈຶ່ງມີກົດໝາຍເຫຼັກ ເພື່ອປ້ອງກັນບໍ່ໃຫ້ສັດປ່າພັນສະເພາະເຫຼົ່ານີ້ກາຍເປັນສິນຄ້າ. ແລ້ວຫວ່າງບໍ່ດົນມານີ້ ກໍມີຂ່າວວ່າທາງການອິນໂດເນເຊຍໄດ້ປັບປຸງກົດໝາຍວ່າດ້ວຍສິ່ງແວດລ້ອມຄືນໃໝ່ ໃນນັ້ນ, ໄດ້ກຳນົດໂທດໜັກຂຶ້ນຕື່ມສຳລັບຜູ້ລັກລອບຄ້າສັດປ່າ ຄືໄດ້ເພີ່ມໂທດຕິດຄຸກສູງສຸດເປັນ 20 ປີ ຈາກ 5 ປີ ໃນເມື່ອກ່ອນໄປພ້ອມໆກັບໂທດປັບໃໝທີ່ເພີ່ມຂຶ້ນເຊັ່ນກັນ. ເພື່ອປ້ອງກັນບໍ່ໃຫ້ຈຳນວນສັດປ່າປະເພດຫວງຫ້າມຫຼຸດລົງ, ທາງການອິນໂດເນເຊຍ ເອົາໃຈໃສ່ໃຫ້ຄວາມສຳຄັນເປັນພິເສດໃນການປົກປັກຮັກສາປ່າໄມ້ໃຫ້ເປັນເຮືອນຢູ່ອູ່ນອນທີ່ປອດໄພ ແລະ ຖາວອນສຳລັບສັດປ່າ. ທາງການໄດ້ໃຫ້ຂໍ້ສະຫຼຸບວ່າ ປັດໄຈສ່ຽງທີ່ເຮັດໃຫ້ຈຳນວນສັດປ່າຫຼຸດລົງນັ້ນ ປະກອບມີ: ການທຳລາຍປ່າເຊິ່ງເປັນການທຳລາຍທີ່ຢູ່ອາໄສຂອງສັດປ່າ, ການລັກລອບລ່າສັດປ່າເພື່ອຂາຍ, ເພື່ອເປັນອາຫານ ຫຼື ເພື່ອເອົາຊິ້ນສ່ວນໄປປະກອບເປັນຢາປິ່ນປົວຫຼືບຳລຸງສຸຂະພາບຕາມຄວາມເຊື່ອ. ຢູ່ອິນໂດເນເຊຍນັ້ນ ໃນແຕ່ລະ 10 ປີ ຈະມີການທົບທວນຄືນບັນຊີສັດປະເພດຫວງຫ້າມ ເພື່ອເບິ່ງວ່າສັດປະເພດໃດຄວນສືບຕໍ່ຫວງຫ້າມ ແລະ ປະເພດໃດທີ່ຄວນໂຍະຍານໃຫ້ຊົມໃຊ້ໄດ້ຕາມລະບຽບການ ເພາະຈຳນວນສັດເພີ່ມຂຶ້ນ ຫຼື ຫຼຸດລົງເກີນຄວາມພໍດີ ກໍຈະສ້າງຜົນກະທົບຕໍ່ຄວາມສົມດຸນທາງນິເວດ.

ຢູ່ກຳປູເຈຍ ປະເທດທີ່ອຸດົມສົມບູນດ້ວຍປ່າ ແລະ ແຫຼ່ງນ້ຳ ບໍ່ວ່າຈະເປັນທະເລ, ລຳເຊ ແລະ ທະເລນ້ຳຈືດ (ຕົງເລສາບ) ທີ່ໃຫຍ່ທີ່ສຸດແຫ່ງໜຶ່ງຂອງໂລກ. ທີ່ພິເສດທີ່ສຸດ ກໍຄືປະເທດນີ້ມີພັນເຕົ່າທີ່ມີສີສັນງົດງາມເປັນເອກະລັກຍາກຊິພົບເຫັນຢູ່ແຫ່ງອື່ນໆຂອງໂລກ. ເມື່ອປະມານ 6 ປີຜ່ານມາ, ໄດ້ມີຂ່າວວ່າທາງການກຳປູເຈຍ ໄດ້ຍົກຍ້າຍເຕົ່ານ້ຳຈືດຈຳນວນ 200 ໂຕ ໄປຢູ່ບ່ອນປອດໄພຈາກການລ່າ ຫຼື ຈາກການສູນພັນຍ້ອນການປ່ຽນແປງຂອງດິນຟ້າອາກາດ. ເຕົ່າທີ່ວ່ານີ້ມີຊື່ວ່າ: "ເຕົ່າພະລາຊາ" ເພາະແຕ່ກ່ອນໆພຸ້ນ ມີແຕ່ເຈົ້າຊີວິດເທົ່ານັ້ນມີສິດສະເຫວີຍ (ກິນ) ເຕົ່າຊະນິດນີ້. ໃນປັດຈຸບັນ ເຕົ່າພະລາຊາຂອງກຳປູເຈຍເປັນ 1 ໃນຈຳນວນເຕົ່າ 25 ສາຍພັນທົ່ວໂລກທີ່ສ່ຽງຈະສູນພັນ. ທີ່ຈິງແລ້ວ ຊາວກຳປູເຈຍເຊື່ອກັນວ່າເຕົ່າພັນນີ້ໄດ້ສູນພັນໄປແຕ່ດົນແລ້ວ ແຕ່ແລ້ວພັດຖືກຄົ້ນພົບຄືນ ໃນປີ 2000 ດັ່ງນັ້ນ, ຈຶ່ງມີມາດຕະການອະນຸຮັກ ແລະ ຂະຫຍາຍພັນຢ່າງຂະຫຍັນຂັນແຂງ.

TE SOLE

ທະນາຄານພັດທະນາລາວ
LDB Bank




*# ບ່າວກະບື*

**ຊາຍ**ລາຄົນໜຶ່ງ ທຸ່ມແຮງຍົກໂຕະໜ່ວຍໃຫຍ່ອອກຈາກເຮືອນຂອງຕົນ. ຄົນເຮືອນໃກ້ຄຽງເຂົາວ່າ "ເຮີຍເຈີດ... ໂຕຊິເອົາໂຕະໄປໃສຫັ້ນ?" ທ້າວເຈີດຕອບວ່າ: "ເຮົາຊິເອົາໄປຮ້ານ ໃຫ້ເຂົາແທກຜ້າປູໃໝ່".

*# BAOKBU*

An stupid man was struggling out og his house with a big table. His neighbour said to him, "Hello, Chert. Where are you going with that then?" And Chert replied, "I'm taking it to the store to have it measured for a new table cloth".

ຕາມພາສາ ກາຕູນ




● ໂດຍ : ພູຜາ

## ສພຂ...

(ຕໍ່ຈາກໜ້າ 8)

ໄຫວຢູ່ສະພາແຫ່ງຊາດ ແລະ ການຕອບບັນຫາ ກ່ຽວກັບການສົນທະນາຢູ່ສະພາແຫ່ງຊາດ, ທັກສະການສົນທະນາຢູ່ກອງປະຊຸມສະພາແຫ່ງຊາດ ແລະ ການສົນທະນາໃນກອງປະຊຸມສະພາແຫ່ງຊາດຄື: ທັກສະ ແລະ ພຶດຕິກຳຕົວຈິງ; ການລົງໃກ້ຊິດຕິດແທດຕິດແທດກັບຜູ້ມີສິດເລືອກຕັ້ງຢູ່ ສສ.ຫວຽດນາມແລກປ່ຽນປະສົບການຂອງຜູ້ແທນສະພາແຫ່ງຊາດ ແລະ ທັກສະການລົງງົບປະມານແຫ່ງລັດ ແລະ ທັກສະໃນການຕິດຕາມກວດກາງົບປະມານແຫ່ງລັດ.

ໂອກາດດັ່ງກ່າວ, ສຳມະນາກອນໄດ້ຜັດປ່ຽນກັນແລກປ່ຽນບົດຮຽນລະຫວ່າງວິທະຍາກອນ ແລະ ສຳມະນາກອນໄດ້ປະກອບຄຳຄິດເຫັນຢ່າງຄຶກຄື້ນແບບກົງໄປກົງມາແບບເປັນກັນເອງຕໍ່ກັບປະສົບການຕົວຈິງ ທີ່ໄດ້ຜ່ານການປະຕິບັດຈັດຕັ້ງມາແລ້ວນັ້ນ ແລະ ຈະນຳເອົາຄວາມຮູ້, ຄວາມເຂົ້າໃຈ, ບົດຮຽນໃໝ່ໆ ທີ່ຕ້ອງໄດ້ສືບຕໍ່ປະຕິບັດຈັດຕັ້ງໃຫ້ປະກົດຜົນເປັນຈິງ ແລະ ເພີ່ມຄວາມສາມາດໃນການນຳໃຊ້ຕົວແທນແຫ່ງສິດ, ພາລະບົດບາດ ແລະ ຜົນປະໂຫຍດອັນໃຫຍ່ຫຼວງໃຫ້ແກ່ປະຊາຊົນບັນດາເຜົ່າ ຜູ້ມີສິດເລືອກຕັ້ງທົ່ວແຂວງໄຊສົມບູນ ໂດຍສະເພາະແມ່ນຕ້ອງນຳໃຊ້ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ທີ່ໃກ້ຈັດຂຶ້ນໃນໄວໆນີ້.

ທັງນີ້, ກໍເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ມີຄວາມເປັນເອກະພາບ, ມີສະຖຽນລະພາ ຖືກຕ້ອງຕາມພາລະບົດບາດສາມາດຮັບປະກັນໃຫ້ວຽກງານມີຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ.

**(ອຳໄພພອນ ແກ້ວວິໄລ)**

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ